

# ພຣະວັດຈະນະ ແຫ່ງຄໍາເລັ້ນລັບ

ຂອງ

## ພຣະບາຮາອູລລາຫ

# ພຣະວັດຈະນະ

# ແຫ່ງຄວາມເລັ້ນລັບ ຂອງ

# ພຣະບາຮາອູລລາຫ໌

ຈັດພິມໂດຍທຳມະສະພາສາສະໜາ ບາຮາຍ
ແຫ່ງ ປະເທດລາວ
**ບ້ານວັດໄຕບັ້ຽ ເມືອງສີໂຄດຕະບອງ**
ກຳແພງນະຄອນວຽງຈັນ ສ.ປ.ປ. ລາວ
ໂທ: 5673

# HIDDEN WORDS OF BAHAÙLLAH

# ຄຳນຳ

ໜັງສືເຫຼັ້ມນີ້ປະກອບດ້ວຍພຣະວັດຈະນະ ທີ່ພຣະບາຮາອຸລລາຫ໌ ສາສະດາຂອງສາສະໜາ ບາຮາຍໄດ້ຊົງກ່າວໄວ້ໃນປີ ພ.ສ. 2401 (1858) ເປັນພຣະວັດຈະນະທີ່ກົບກອງຄຳສອນ ໃນສາສະໜາອື່ນໆ ທີ່ຜ່ານມາແລ້ວມາກັ້ນກອງເປັນຖ້ອຍຄຳສັ້ນໆ ແຕ່ແກ່ນສານຂອງຄຳສອນນັ້ນຍັງຄົງເດີມ.

ໂດຍຕະລອດຂອງໜັງສືເຫຼັ້ມນີ້ ພຣະບາຮາອຸລລາຫ໌ ຊົງເຕືອນໃຫ້ຄົນພະຍາຍາມຢູ່ ເປັນນິດທີ່ຈະໄປສູ່ສະພາວະອັນສູງຍິ່ງຂຶ້ນໄປ ແລະ ພະຍາຍາມທີ່ຈະຂະຈັດສິ່ງທີ່ຈ່ອງຄົງໄວ້ໃຫ້ຢູ່ໃນອຳນາດຂອງໂລກ ທາງວັດຖຸ ພຣະບາຮາອຸລລາຫ໌ ຊົງກ່າວໄວ້ ໃນຕອນຈົບຂອງໜັງສືເຫຼັ້ມນີ້ວ່າ ບັດນີ້ຈຶ່ງເຫຼືອຢູ່ວ່າ ຄວາມພະຍາຍາມຂອງທ່ານ ໃນທາງແຫ່ງຄວາມຫຼຸດພົ້ນນັ້ນ ຈະປະຈັກພຽງໃດ.

ມະນຸດມີຄວາມບົກພ່ອງຢູ່ໃນຕົວ ເພື່ອວ່າດ້ວຍນ້າໃຈ ແລະ ດ້ວຍຄວາມພະຍາຍາມເຂົາຈະໄດ້ສ້າງຄວາມສົມບູນໃຫ້ແກ່ສະພາວະຂອງເຂົາດ້ວຍຄວາມພະຍາຍາມ

ນີ້ ເຮົາຈະໄດ້ມີຄ່າຄວນແກ່ການ ໄປພົບພຣະຜູ້ເປັນເຈົ້າ ແລະ ຈະໄດ້ສະທ້ອນຄວາມງາມຂອງຕົວພຣະອົງຈາກຕົວເຮົາເອງ ຊີວິດນີ້ເປັນສະໜາມສຳຫຼັບເຂົາແລະເຂົາຈະໄດ້ຮັບການສັນລະເສີນ ແລະ ໄດ້ຮັບລາງວັນຫຼືບໍ່ນັ້ນ ກໍຈາກການກະທຳຂອງເຂົາ ໃນສະໜາມຊີວິດນີ້ ນີ້ຄືໂອກາດທີ່ສຳທີພິເສດທີ່ເຂົາຈະສວຍເອົາໄວ້ ດັ່ງທີ່ພຣະບາຮາອຸລລາຫ໌ ໄດ້ເຕືອນຢູ່ເປັນນິດ.

ເນື່ອງຈາກວ່າພຣະວັດຈະນະ ຕາມໜັງສືເຫຼັ້ມນີ້ເປັນການກັ່ນກອງເອົາສາລະຂອງທຳ ມາສະແດງຄວາມເຂົ້າໃຈອາດຈະບໍ່ງ່າຍໜັກ ສຳຫຼັບໃນພຣະວັດຈະນະບາງຕອນໂດຍສະເພາະ ເນື່ອເປັນຄຳໃນລັກສະນະອຸປະມາ ໜັງສືເຫຼັ້ມນີ້ ຈຶ່ງໄດ້ຊີ້ວ່າ

" ພຣະວັດຈະນະແຫ່ງຄວາມເລິກລັບ " ຈຶ່ງຜູ້ອ່ານອາດຕ້ອງໃຊ້ຄວາມພະຍາຍາມ ທີ່ຈະຫາຄວາມໝາຍໃນຄວາມເລັ້ນລັບເຫົ່ານີ້.

**ທຳມະສະພາສາລະໜາບາຮາຍ**

**ແຫ່ງ ສປປ ລາວ**

## I. ພຣະອົງເປັນຄວາມຮຸ່ງເຮືອງແຫ່ງ ຄວາມຮຸ່ງເຮືອງທັງປວງ

ຕໍ່ໄປນີ້ ເປັນຖ້ອຍຄຳ ທີ່ສືບມາຈາກ ອານາຈັກແຫ່ງຄວາມຮຸ່ງເຮືອງເປັນກະແສຮັບສັ່ງ ທີ່ພຣະຜູ້ຊົງອຳນາດ ແລະ ນະທີທານຸພາບ ໄດ້ເປີດເຜີຍ ຕໍ່ພຣະສາສະດາທັງຫຼາຍໃນອາດີດເຂົາໄດ້ນຳເອົາສາລະເນື້ອ ໃນແຕ່ງຖ້ອຍຄຳເຫຼົ່ານັ້ນມາຜູກໄວ້ໃຫ້ເປັນຂໍ້ຄວາມສັ້ນໆ ເພື່ອເປັນຂອງຂວັນແກ່ຜູ້ປະພຶດທຳທັງຫຼາຍ ເພື່ອວ່າເຂົາເຫຼົ່ານັ້ນຈະໄດ້ຍຶດໝັ້ນ ຢູ່ໃນພຣະກະຕິກາຂອງພຣະຜູ້ເປັນເຈົ້າຈະໄດ້ທຳໃຫ້ ສົມກັບຄວາມໄວ້ວາງໃຈຂອງພຣະອົງເພື່ອວ່າເຂົາເຫຼົ່ານັ້ນ ຈະບັນລຸຄຸນນະທຳອັນເປັນທິບໃນແດນແຫ່ງທຳນະ.

*1. ດູກ່ອນບຸດແຫ່ງທຳມະ:*

ຄຳແນະນຳເບື້ອງຕົ້ນຂອງເຮົາພຣະອົງ ໄດ້ແກ່ສິ່ງນີ້: ຈົ່ງມີຫົວໃຈອັນບໍລິສຸດ ເມດຕາຜ່ອງໃສເພື່ອວ່າໃນ

ຫົວໃຈຂອງເຈົ້ານັ້ນ ຈະເປັນອານາຈັກ ຢັ້ງຢືນຖາວອນ ແລະ ບໍ່ຮູ້ສິ້ນ.

*ດູກ່ອນບຸດແຫ່ງທຳ:*

ໃນສາຍຕາຂອງເຮົາສິ່ງທີ່ເປັນທີ່ຮັກທີ່ສຸດ ໃນບັນດາສິ່ງທັງຫລາຍນັ້ນໄດ້ແກ່ຄວາມຍຸດຕິທຳ ຈົ່ງຢ່າຫັນໜ້າໄປຈາກສິ່ງນີ້ຫາກເຈົ້າປາດຖະໜາເຮົາ ແລະ ຢ່າລະເລີຍຄວາມຍຸດຕິທຳ ເພື່ອວ່າເຮົາຈະໄວ້ໃຈໃນຕົວເຈົ້າດ້ວຍຄວາມຍຸດຕິທຳ ທີ່ເຈົ້າມີຈະຊ່ວຍໃຫ້ເຈົ້າເຫັນດ້ວຍສາຍຕາຂອງເຈົ້າເອງ ແລະ ບໍ່ແມ່ນວ່າສາຍຕາຂອງຜູ້ອື່ນ ແລະເຈົ້າຈະຮູ້ຄວາມຮູ້ຂອງເຈົ້າເອງບໍ່ແມ່ນວ່າດ້ວຍຄວາມຮູ້ຂອງຜູ້ອື່ນ ຈົ່ງຄຳນຶງເຖິງຄຳນີ້ໃນໃຈຂອງເຈົ້າແລະຕຶກຕອງດູວ່າມັນເປັນຄວາມຈຳເປັນພຽງໃດທີ່ເຈົ້າຈະເປັນເຊັ່ນນີ້ໂດຍແທ້ຈິງຄວາມຍຸດຕິທຳເປັນຂອງກຳນັນທີ່ເຮົາໄດ້ມອບໃຫ້ແກ່ເຈົ້າເປັນສັນຍານແຫ່ງຄວາມກະລຸນາ ຂອງເຮົາເຈົ້າຈົ່ງຕັ້ງຄວາມຍຸດຕິທຳໄວ້ເບື້ອງໜ້າຂອງເຈົ້າ.

3. ດູກ່ອນບຸດແຫ່ງມະນຸດ:

ເຖິງແມ່ນວ່າເຮົາຈະຢູ່ ໃນຄວາມບໍ່ຮູ້ສິ້ນສຸດ ຂອງເຮົາ ແລະ ດ້ວຍສາລະຂອງເຮົາເຊິ່ງຫາອາດິດແລະອານາຄົດບໍ່ໄດ້ເຮົາກໍຍັງມີຄວາມຮັກໃນເຈົ້າ ດັ່ງນັ້ນເຮົາຈຶ່ງສ້າງສັນເຈົ້າໄວ້ ແລະ ເອົາຮູບຮອຍຂອງເຮົາຈາລຶກໄວ້ ໃນຕົວເຈົ້າ ແລະ ເຜີຍໃຫ້ເຈົ້າຮູ້ ໃນຄວາມງາມຂອງເຮົາ.

4. ດູກ່ອນບຸດແຫ່ງມະນຸດ:

ເຮົາຮັກໃນການສ້າງສັນຂອງເຈົ້າ ຈຶ່ງໄດ້ສ້າງເຈົ້າ ດັ່ງນັ້ນ ຈົ່ງມີຄວາມຮັກໄດ້ ເພື່ອວ່າເຮົາຈະໄດ້ຄຳນຶງເຖິງເຈົ້າ ແລະ ເຮົາຈະໄດ້ທຳໃຫ້ວິນຍານຂອງເຈົ້າເຕັມດ້ວຍຊີວິດ.

5. ດູກ່ອນບຸດແຫ່ງພາວະ:

ຈົ່ງຮັກເຮົາເພື່ອເຮົາຈະຮັກເຈົ້າໄດ້ ຫາກເຈົ້າບໍ່ມີຄວາມຮັກໃນເຮົາ ຄວາມຮັກຈາກເຮົາ ຈະໄປເຖິງເຈົ້າໄດ້ຢ່າງໃດ ດູກ່ອນຜູ້ຮັບໃຊ້ສູ່ເຈົ້າຈົ່ງຮູ້ຂໍ້ຄວາມນີ້ໄວ້.

6. ດູກ່ອນບຸດແຫ່ງພາວະ:

ສະຫວັນຂອງເຈົ້າເປັນຄວາມຮັກຂອງເຮົາ ເພາະອັນເປັນທິບຂອງເຈົ້າ ຄືການກັບມາຢູ່ລວມກັບເຮົາ ຈົ່ງເຂົ້າມາເຖີດ ແລະຢ່າໄດ້ລໍຊ້າ ນີ້ຄືສິ່ງຊຶ່ງໄດ້ກຳນົດໄວ້ແລ້ວສຳຫຼັບເຈົ້າ ໃນອານາຈັກເບື້ອງບົນຂອງເຮົາແລະໃນພົບອັນເໜືອພົບທັງຫຼາຍຂອງເຮົາ.

7. ດູກ່ອນບຸດແຫ່ງມະນຸດ:

ຫາກເຈົ້າຮັກເຮົາ ຈົ່ງໃປສະຈາກຕົນເອງ ແລະ ຫາກເຈົ້າສະແຫວງຫາຄວາມພໍໃຈຂອງເຮົາ ຈົ່ງລະນຶກເຖິງຄວາມພໍໃຈຂອງຕົວເຈົ້າເອງເພື່ອເຈົ້າອາດຕາຍໃນເຮົາແລະເຮົາອາດຢູ່ຢ່າງບໍ່ຮູ້ສິ້ນໃນຕົວເຈົ້າ

8. ດູກ່ອນບຸດແຫ່ງທຳ:

ຫາກເຈົ້າຫາຄວາມສະຫງົບສຸກບໍ່ໄດ້ບໍ່ສະຫຼະຕົວເອງ ແລະ ຫັນມາຫາເຮົາເພາະວ່າເຮົາຕ້ອງການໃຫ້ເຈົ້າຈະເລີນຮຸ່ງເຮືອງໃນຊື່ຂອງເຮົາບໍ່ແມ່ນວ່າໃນຊື່ຂອງເຈົ້າເອງ ແລະ ໄວ້ວາງໃຈເຮົາແທນທີ່ຈະໄວ້ວາງໃຈໃນຕົວຂອງເຈົ້າເອງ ດ້ວຍເຫດວ່າເຮົາປາດຖະໜາ

ຫ້າມຈຳໜ່າຍ

ທີ່ຈະໃຫ້ເຈົ້າຮັກເຮົາເທົ່ານັ້ນ ບໍ່ແມ່ນວ່າຮັກໃນສິ່ງທັງຫຼາຍທີ່ມີຢູ່.

9. *ດູກ່ອນບຸດແຫ່ງພາວະ:*

ຄວາມຮັກຂອງເຮົາເປັນປະການຂອງເຮົາ ຜູ້ໃດທີ່ເຂົ້າມາໃນນີ້ຈະປອດໄພແລະພົ້ນຄົງສ່ວນຜູ້ໃດທີ່ຫັນໜອອກໄປຈະຫຼົງທາງ ແລະລົ້ມລະລາຍໂດຍແທ້.

10. *ດູກ່ອນບຸດແຫ່ງວັດຈະນະ (ຄຳເວົ້າ):*

ຈົ່ງເຂົ້າມາເຖີດເພື່ອວ່າເຈົ້າຈະໄດ້ຢູ່ໃນຄວາມປອດໄພ ຄວາມຮັກຂອງເຮົາຢູ່ໃນຕົວເຈົ້າ ຈົ່ງຮູ້ຂໍ້ນີ້ໄວ້ເພື່ອວ່າເຈົ້າຈະໄດ້ພົບເຮົາຢູ່ກັບເຈົ້າ.

11. *ດູກ່ອນບຸດແຫ່ງພາວະ :*

ເຈົ້າຄືຕະກຽງຂອງເຮົາ ແລະ ແສງຂອງເຮົາຢູ່ໃນຕົວເຈົ້າ ຈົ່ງຮັບແສງນັ້ນໃນຕົວເຈົ້າ ແລະ ຢ່າສະແຫວງຫາຈາກຜູ້ອື່ນນອກຈາກເຮົາ ເພາະວ່າເຮົາໄດ້ສ້າງເຈົ້າໃຫ້ສົມບູນ ແລະ ທີ່ຕົວເຈົ້ານັ້ນເຮົາໄດ້ສາດແສງແຫ່ງຄວາມກະລຸນາໄວ້ຢ່າງພ້ອມມູນ.

12. ດູກ່ອນບຸດແຫ່ງພາວະ:

ເຮົາໄດ້ສ້າງເຈົ້າຂຶ້ນມາດ້ວຍມືແຫ່ງອຳນາດ ແລະ ໄດ້ປະດິດເຈົ້າດ້ວຍນິ້ວແຫ່ງກຳລັງ ພາຍໃນ ຕົວເຈົ້ານັ້ນເຮົາໄດ້ວາງສາລະແຫ່ງແສງສະຫວ່າງຂອງເຮົາໄວ້ ເຈົ້າຈົ່ງພໍໃຈກັບແສງນັ້ນ ແລະ ຢ່າໄດ້ສະແຫວງຈາກທີ່ອື່ນໃດ ເພາະວ່າງານຂອງເຮົານັ້ນ ສົມບູນແລ້ວ ແລະ ຄຳສັ່ງຂອງເຮົານັ້ນຜູກພັນ ຈົ່ງຢ່າໄດ້ສົງໃສ ຫຼື ຕັ້ງຄຳຖາມໃນຄວາມສົມບູນຂອງເຮົາ.

13. ດູກ່ອນບຸດແຫ່ງທຳ:

ເຮົາພຣະອົງໄດ້ສ້າງເຈົ້າຂຶ້ນມາໃຫ້ມັ່ງມີ ເຫດໃດຈຶ່ງທຳຕົວໃຫ້ທຸກຍາກ ເຮົາໄດ້ສ້າງເຈົ້າຂຶ້ນມາໃຫ້ມີສັກສີ ເຫດໃດຈຶ່ງທຳຕົວໃຫ້ຕ່ຳຕ້ອຍ ເຮົາໃຫ້ເຈົ້າມີພາວະ ຂຶ້ນມາຈາກສາລະແຫ່ງຄວາມຮູ້ ເຫດໃດ ຈະສະແຫວງປັນຍາຈາກຄົນອື່ນ ນອກຈາກເຮົາພຣະອົງເອງ. ເຮົາພຣະອົງ ໄດ້ເສກສັນເຈົ້າຂຶ້ນມາດ້ວຍມິນແຫ່ງຄວາມຮັກ ເຈົ້າໄປຫຍຸ້ງກັບຕົນເອງ ແລະ ຄົນອື່ນໄດ້ຢ່າງໃດ ຈົ່ງມອງເຂົ້າໄປໃນຕົວຂອງເຈົ້າ

ເອງ ເພື່ອວ່າຈະໄດ້ພົບພຣະອົງຢືນຢູ່ ໃນຕົວເຈົ້າ ດ້ວຍພະລັງອຳນາດ ແລະ ເປັນຢູ່ດ້ວຍຕົນເອງ.

14. ດູກ່ອນບຸດແຫ່ງມະນຸດ:

ເຈົ້າເປັນອານາຈັກຂອງເຮົາພະອົງ, ແລະ ອານາຈັກຂອງພຣະອົງບໍ່ອາດຈະສູນສິ້ນໄດ້ ເຫດໃດເຈົ້າຈົ່ງຢ້ານວ່າຈະສິ້ນສູນໄປ ເຈົ້າເປັນແສງຂອງເຮົາພຣະອົງ ແລະ ແສງຂອງເຮົາພຣະອົງນັ້ນບໍ່ອາດຈະດັບໄປ ເຫດໃດຈົ່ງຢ້ານຄວາມຕາຍ ເຈົ້າເປັນຄວາມຮຸ່ງເຮືອງຂອງເຮົາ ພຣະອົງ ແລະ ຄວາມຮຸ່ງເຮືອງຂອງເຮົາພຣະອົງນັ້ນ ຈະບໍ່ຈາງຫາຍໄປ ເຈົ້າເປັນອາພອນ ຂອງເຮົາພຣະອົງ ອາພອນຂອງເຮົາພຣະອົງບໍ່ອາດຈະເກົ່າໄດ້ ຈົ່ງຢູ່ໃນຄວາມຮັກຂອງເຈົ້າເພື່ອເຮົາພຣະອົງເຖີດ ເພື່ອວ່າເຈົ້າອາດຈະໄດ້ພົບເຮົາພຣະອົງ ໃນອານາຈັກ ແຫ່ງຄວາມຮຸ່ງເຮືອງ.

15. ດູກ່ອນບຸດແຫ່ງວັດຈະນະ (ຄຳເວົ້າ):

ຈົ່ງຫັນໜ້າມາຫາເຮົາພຣະອົງ ແລະ ຈົ່ງສະຫຼະເສຍ

ໃຫ້ສົ້ນນອກຈາກເຮົາພຣະອົງ ເພາະຄວາມຢັ້ງຢືນ
ແຫ່ງອຳນາດອະທິປະໄຕ ແລະ ອານາຈັກຂອງເຮົາ
ພຣະອົງຈະບ່ດັບສຸນໄປ ຫາກເຈົ້າສະແຫວງຫາໃຜ
ນອກໄປຈາກເຮົາພຣະອົງເອົາເຖີດ ເຖິງເຈົ້າຈະສະ
ແຫວງຫາທົ່ວຈັກກະພົບ ໄປຕລອດການ ການສະ
ແຫວງຫາຂອງເຈົ້າກໍ່ບໍ່ມີປະໂຫຍດ.

16. *ດູກ່ອນບຸດແຫ່ງຄວາມສະຫວ່າງ:*
ຈົ່ງລືມເສຍທັງໝົດນອກຈາກເຮົາພຣະອົງ ແລະ ຈົ່ງ
ຕິດຕໍ່ກັບຈິດວິນຍານຂອງເຮົາພຣະອົງ ນີ້ເປັນແກ່ນ
ຂອງຄຳສັ່ງຂອງເຮົາພຣະອົງ ດັ່ງນັ້ນຈົ່ງຫັນມາຫາ
ເຮົາພຣະອົງ.

17. *ດູກ່ອນບຸດແຫ່ງມະນຸດ:*
ຈົ່ງໄດ້ພໍໃຈຢູ່ກັບເຮົາ ແລະ ຢ່າໄດ້ສະແຫວງຫາຜູ້
ຊ່ວຍອື່ນໃດ ມີແຕ່ເຮົາພຣະອົງເທົ່ານັ້ນ ບໍ່ມີໃຜອື່ນ
ທີ່ຈະທຳໃຫ້ເຈົ້າພໍໃຈໄດ້.

18. *ດູກ່ອນບຸດແຫ່ງທຳມະ:*
ຈົ່ງຢ່າໄດ້ຂໍຈາກເຮົາພຣະອົງ ໃນສິ່ງໃດທີ່ເຮົາພຣະ

ອົງບໍ່ປະສົງຈະໃຫ້ ດັ່ງນັ້ນຈົ່ງພໍໃຈໃນສິ່ງທີ່ເຈົ້າພຣະ
ອົງໄດ້ກຳນົດໄວ້ສຳລັບເຈົ້າ ເພາະວ່ານັ້ນ ແລະ ຈະ
ເປັນປະໂຫຍດແກ່ເຈົ້າ ຫາກວ່າຕົວເຈົ້ານັ້ນ ພໍໃຈ
ຕາມນັ້ນໄດ້.

19. *ດູກ່ອນບຸດຜູ້ມີຄວາມນຶກຄິດ:*

ເຈົ້າພຣະອົງໄດ້ຫາຍໃຈເຂົ້າໄປໃນຕົວເຈົ້າ ລົມຫາຍ
ໃຈ ແຫ່ງດວງຈິດຂອງເຈົ້າພຣະອົງ ເພື່ອວ່າເຈົ້າ
ຈະເປັນຜູ້ທີ່ຮັກເຈົ້າພຣະອົງໄດ້ ເຫດໃດເຈົ້າຈົ່ງ
ຈາກເຈົ້າພຣະອົງໄປ ແລະ ໄປສະແຫວງຫາຄົນຮັກ
ອື່ນນອກຈາກເຈົ້າພຣະອົງ.

20. *ດູກ່ອນບຸດແຫ່ງທຳມະ:*

ເຈົ້າພຣະອົງຮຽກຮ້ອງຈາກເຈົ້າໄດ້ຫຼາຍ ແລະ ຈະ
ລືມບໍ່ໄດ້ ຄຸນງາມຄວາມດີຂອງເຈົ້າພຣະອົງນັ້ນ ມີຕໍ່
ເຈົ້າ ຈົນບໍ່ອາດປິດບັງໄດ້ ຄວາມຮັກຂອງເຈົ້າພຣະ
ອົງເປັນເຮືອນຢູ່ໃນຕົວເຈົ້າຊຶ່ງຈະລຶກລັບເສຍ ບໍ່ໄດ້
ຄວາມສະຫວ່າງຈາກເຈົ້າພຣະອົງປະກົດ ຢູ່ໃນຕົວ
ເຈົ້ານັ້ນຈະມືດມົວໄປບໍ່ໄດ້.

21. *ດູກ່ອນບຸດແຫ່ງມະນຸດ:*

ເທິງຕົ້ນໄມ້ ແຫ່ງ ຄວາມຮຸ່ງເຮືອງ ຂອງຄວາມຮຸ່ງເຮືອງ ເຈົ້າພຣະອົງ ໄດ້ແຂວນຜົນອັນງາມທີ່ສຸດ ສຳລັບເຈົ້າແລ້ວ ດ້ວຍເຫດໃດເຈົ້າຈຶ່ງຫັນໜ້າ ໄປເມີນເສີຍ? ແລະ ພໍໃຈຢູ່ກັບສິ່ງຊຶ່ງດີໜ້ອຍກວ່ານີ້ ຈົ່ງຫັນກັບ ມາ ສູ່ສິ່ງທີ່ດີກວ່າສຳລັບເຈົ້າເຖີດ ໃນແດນອັນສູງສົ່ງນີ້.

22. *ດູກ່ອນບຸດແຫ່ງທຳມະ:*

ເຈົ້າພຣະອົງໄດ້ສ້າງເຈົ້າຂຶ້ນມາ ດ້ວຍຄວາມສູງສົ່ງ ແຕ່ແລ້ວ ເຈົ້າທຳຕົວ ໃຫ້ຕ່ຳຕ້ອຍ ຈົ່ງລຸກຂຶ້ນເຖີດ ເພື່ອໄປສູ່ຈຸດໝາຍທີ່ເຈົ້າໄດ້ຖືກສ້າງຂຶ້ນມາ.

23. *ດູກ່ອນບຸດແຫ່ງຄວາມລ້ຳເລີດ:*

ເຈົ້າພຣະອົງ ໄດ້ຮຽກຮ້ອງເຈົ້າໄປສູ່ ຄວາມບໍ່ຮູ້ສິ້ນ ແຕ່ແລ້ວ ເຈົ້າໄປ ສະແຫວງຫາ ສິ່ງທີ່ຈະວອດວາຍ ແມ່ນຫຍັງທຳໃຫ້ເຈົ້າຫັນໄປ ຈາກຄວາມປະສົງຂອງເຈົ້າພຣະອົງ ແລະ ໄປສະແຫວງຫາ ຄວາມປະສົງຂອງເຈົ້າເອງ.

24. ດູກ່ອນບຸດແຫ່ງມະນຸດ:

ຢ່າໄດ້ລະເມີດ ຂໍ້ກຳນົດທີ່ວາງໄວ້ ສຳລັບເຈົ້າ ແລະ ຢ່າໄດ້ຮຽກຮ້ອງ ສິ່ງຊຶ່ງບໍ່ເໝາະສົມ ສຳລັບເຈົ້າ ຈົ່ງ ມອບກາຍຂອງເຈົ້າ ມາເບື້ອງໜ້າ ຂອງພຣະຜູ້ເປັນ ເຈົ້າຂອງເຈົ້າ ຜູ້ເປັນເຈົ້າແຫ່ງພະລັງແລະອຳນາດ.

25. ດູກ່ອນບຸດແຫ່ງທຳມະ:

ຢ່າໄດ້ລັງກຽດຕໍ່ຜູ້ຍາກຈົນ ເພາະວ່າ ເຮົາພຣະອົງ ເປັນຜູ້ນຳເຂົາ ບົນທາງຂອງເຂົາ ແລະ ເຮົາພຣະ ອົງຈະເປັນຜູ້ເຫັນເຈົ້າຢູ່ໃນສະພາບທີ່ລຳບາກ ແລະ ໃຫ້ເຈົ້າໄດ້ຮັບໂທດຫຼາຍຂຶ້ນກ່ວານີ້.

26. ດູກ່ອນບຸດແຫ່ງພາວະ:

ເປັນຫຍັງເຈົ້າຈຶ່ງລືມຄວາມຜິດຂອງຕົນເອງ ແລ້ວ ໄປວຸ້ນກັບຄວາມຜິດຂອງຜູ້ອື່ນ ໃຜທີ່ເປັນເຊັ່ນນີ້ຈະ ໄດ້ຮັບໂທດ ຈາກເຮົາພຣະອົງ.

27. ດູກ່ອນບຸດແຫ່ງມະນຸດ:

ຢ່າໄດ້ຫາຍໃຈ ເປັນຄວາມບາບຂອງຜູ້ອື່ນ ໃນເມື່ອ

ເຈົ້າເອງນັ້ນກໍເປັນຜູ້ບາບ ຫາກເຈົ້າລະເມີດຄໍາສັ່ງ
ອັນນີ້ ເຈົ້າຈະໄດ້ຮັບເຄາະ ແລະ ເຮົາພຣະອົງ ຈະ
ເປັນສັກຂີໃນເລື່ອງນີ້.

28. ດູກ່ອນບຸດແຫ່ງທ່ານະ :

ຈົ່ງຮູ້ຄວາມຈິງຂໍ້ນີ້ເຖີດວ່າ ຜູ້ໃດທີ່ບອກໃຫ້ຜູ້ອື່ນຍຸດ
ຕິທໍາ ສ່ວນຕົວເຂົາເອງນັ້ນ ກະທໍາອັນ ບໍ່ຍຸດຕິທໍາ
ເຂົາຜູ້ນີ້ບໍ່ແມ່ນເປັນຂອງເຮົາພຣະອົງ ເຖິງແມ້ເຂົາ
ຈະນໍາຊື່ເຮົາພຣະອົງໄປອ້າງ.

29. ດູກ່ອນບຸດແຫ່ງພາວະ :

ຢ່າໄດ້ກ່າວຫາ ຜູ້ອື່ນ ? ໃນສິ່ງຊຶ່ງເຈົ້າເອງ ຍັງບໍ່
ກ່າວຫາຕົວເຈົ້າເອງ ແລະ ຢ່າໄດ້ເວົ້າ ໃນສິ່ງ ທີ່
ເຈົ້າເຮັດບໍ່ໄດ້ນີ້ເປັນຄໍາສັ່ງຂອງເຮົາ ພຣະອົງຕໍ່
ເຈົ້າ ຈົ່ງປະຕິບັດເຖີດ.

30. ດູກ່ອນບຸດແຫ່ງມະນຸດ:

ຢ່າໄດ້ປະຕິເສດຜູ້ຮັບໃຊ້ຂອງເຮົາພຣະອົງ.ຫາກວ່າ
ເຂົາຂໍສິ່ງໃດຈາກເຈົ້າເພາະວ່າໃບໜ້າຂອງເຂົານັ້ນ

ຄືໃບໜ້າຂອງເຮົາພຣະອົງ ດັ່ງນັ້ນຈຶ່ງມີຄວາມອາຍ
ຕໍ່ໜ້າເຮົາພຣະອົງ.

31. ດູກ່ອນບຸດແຫ່ງພາວະ:

ຈົ່ງສຳຫຼວດຕົວເຈົ້າເອງແຕ່ລະວັນ ກ່ອນທີ່ຈະຖືກ
ຮຽກຮ້ອງໄປຄິດໄລ່ບັນຊີ ເພາະວ່າຄວາມຕາຍນັ້ນ
ຈະມາຍັງເຈົ້າໂດຍບໍ່ໄດ້ບອກລ່ວງໜ້າ ແລະ ເຈົ້າ
ຕ້ອງຖືກຮຽກຮ້ອງ ໄປຄິດບັນຊີ ສຳລັບການກະທຳ
ຕ່າງໆຂອງເຈົ້າ.

32. ດູກ່ອນບຸດແຫ່ງຄວາມລ້ຳເລີດ:

ເຮົາພຣະອົງ ໄດ້ທຳໃຫ້ຄວາມຕາຍເປັນຜູ້ນຳສານ
ແຫ່ງຄວາມປິຕິມາຍັງເຈົ້າ ເຫດໃດ ເຈົ້າຈຶ່ງເສຍ
ໃຈລະ ເຮົາພຣະອົງ ໄດ້ໃຫ້ແສງສະຫວ່າງສາດ
ຄວາມງາມມາຍັງເຈົ້າ ເຫດໃດເຈົ້າຈຶ່ງບັງ ຕົວຂອງ
ເຈົ້າເສຍ.

33. ດູກ່ອນບຸດແຫ່ງທຳ:

ເຮົາພຣະອົງຮຽກຮ້ອງເຈົ້າດ້ວຍຂ່າວສານ ອັນປິຕິ

ແຫ່ງຄວາມສະຫວ່າງຈົ່ງມີຄວາມປິຕິເກີດ ເຮົາພຣະ
ອົງຮຽກເຈົ້າໄປສູ່ສາລາແຫ່ງຄວາມສັກສິດ ຈົ່ງເຂົ້າ
ໄປຢູ່ເກີດ ເພື່ອວ່າເຈົ້າຈະໄດ້ມີຊີວິດ ຢູ່ໃນຄວາມ
ສະງົບຊົ່ວນິລັນດອນ.

34. ດູກ່ອນບຸດແຫ່ງທ່ານ:

ຂ່າວສານແຫ່ງການໄດ້ກັບໄປຢູ່ຮ່ວມກັນ ໄດ້ນຳມາ
ຍັງເຈົ້າແລ້ວ ເຈົ້າຍັງເຂົ້າໂສກຢູ່ບໍ່ ດວງວິນຍານ
ແຫ່ງອຳນາດ ໄດ້ຢືນຢັນຕໍ່ເຈົ້າໃນທາງຂອງເຮົາ
ພຣະອົງແລ້ວ ເຫດໃດເຈົ້າຈຶ່ງປິດບັງຕົວເຈົ້າເສຍ
ແສງແຫ່ງພະພັກຂອງພຣະອົງນຳເຈົ້າຢູ່ ເຈົ້າຈະໄປ
ທາງທີ່ຜິດໄດ້ຢ່າງໃດ.

35. ດູກ່ອນບຸດແຫ່ງມະນຸດ:

ຈົ່ງຢ່າໄດ້ເສຍໃຈເວັ້ນເສຍແຕ່ ເມື່ອເຈົ້າໄກໄປຈາກ
ເຮົາພຣະອົງ ຈົ່ງຢ່າໄດ້ດີໃຈເວັ້ນແຕ່ ເມື່ອເຈົ້າໄດ້
ເຂົ້າມາໃກ້ ແລະ ໄດ້ກັບມາຍັງເຮົາພຣະອົງ.

36. ດູກ່ອນບຸດແຫ່ງມະນຸດ:

ຈົ່ງຍິນດີໃນຄວາມປິຕິຂອງຫົວໃຈເຈົ້າ ເພື່ອວ່າເຈົ້າ

ອາດມີຄ່າຄວນແກ່ການພົບເຮົາພຣະອົງ ແລະ ເພື່ອທີ່ເຈົ້າຈະໄດ້ສະທ້ອນຄວາມງາມ ຂອງເຮົາພຣະອົງອອກໄປ.

37. *ດູກ່ອນບຸດແຫ່ງມະນຸດ:*

ຢ່າໄດ້ ຫຼີກລ້ຽງຕົວເຈົ້າອອກຈາກເສື້ອຄຸມອັນງາມຂອງເຮົາພຣະອົງແລະຢ່າໄດ້ພາກຕົວຂອງເຈົ້າເອງໄປຈາກສາຍທານອັນມະຫັດສະຈັນ ຂອງເຮົາພຣະອົງ ຖ້າບໍ່ດັ່ງນັ້ນແລ້ວເຈົ້າຈະກະຫາຍຢູ່ເລື້ອຍໆ.

38. *ດູກ່ອນບຸດແຫ່ງພາວະ:*

ເພື່ອຄວາມຮັກໃນເຮົາພຣະອົງ ຈົ່ງເດີນໄປໃນຄຳບັນຊາຂອງເຮົາພຣະອົງ ແລະ ຫາກວ່າເຈົ້າສະແຫວງຫາຄວາມຮັກ ຈາກເຮົາພຣະອົງ ຈົ່ງປະຕິເສດສິ່ງຊຶ່ງເຈົ້າປະສົງນັ້ນເສຍ.

39. *ດູກ່ອນບຸດແຫ່ງມະນຸດ:*

ຢ່າໄດ້ລະເລີຍບັນຍັດຕ່າງໆ ຂອງເຮົາພຣະອົງ ຫາກວ່າເຈົ້າຮັກ ໃນຄວາມງາມຂອງເຮົາພຣະອົງ ແລະຈົ່ງຢ່າໄດ້ລືມຄຳແນະນຳຂອງເຮົາພະອົງ ຫາກວ່າ

ເຈົ້າປະສົງສິ່ງທີ່ຈະໃຫ້ເຮົາພຣະອົງພໍໃຈເຈົ້າ.

40. ດູກ່ອນບຸດແຫ່ງມະນຸດ:

ເຖິງວ່າເຈົ້າ ຈະບິນລ່ອງລອຍ ໄປໃນຫ້ອງອາກາດ ອັນກວ້າງໃຫຍ່ ແລະ ຂ້າມເສັ້ນຂວາງຫ້ອງຟ້າອັນກວ້າງໃຫຍ່ແຫ່ງສະຫວັນ ກໍ່ເຈົ້າຈະຫາທີ່ພັກບໍ່ໄດ້ ນອກຈາກ ເມື່ອເຈົ້າຍອມຮັບຄຳບັນຊາ ຂອງເຮົາພຣະອົງ ແລະ ມີຄວາມນອບນ້ອມຕໍ່ໜ້າຂອງເຮົາພຣະອົງ.

41. ດູກ່ອນບຸດແຫ່ງມະນຸດ:

ຈົ່ງຂະຫຍາຍສາສະໜາຂອງເຮົາພະອົງ ໃຫ້ໃຫຍ່ຂຶ້ນ ເພື່ອວ່າເຮົາພຣະອົງ ອາດຈະໃຫ້ເຈົ້າໄດ້ຮູ້ ໃນຄວາມລີ້ລັບອັນຍິ່ງໃຫຍ່ຂອງເຮົາພຣະອົງ ແລະເພື່ອເຮົາພຣະອົງ ຈະໄດ້ສາດແສງແຫ່ງຄວາມບໍ່ຮູ້ສິ້ນໄປຍັງເຈົ້າ.

42. ດູກ່ອນບຸດແຫ່ງມະນຸດ:

ຈົ່ງນອບນ້ອມຕົວເຈົ້າເອງ ເບື້ອງໜ້າເຮົາເພື່ອວ່າເຮົາພຣະອົງຈະໄປຢ້ຽມເຈົ້າດ້ວຍຄວາມກະລຸນາຈົ່ງ

ລຸກຂຶ້ນເພື່ອຄວາມມີໄຊ ຂອງສາສະໜາ ຂອງເຮົາ
ພຣະອົງ ເພື່ອວ່າເຈົ້າອາດຈະໄດ້ຮັບໄຊຊະນະ ຂະ
ນະທີ່ຍັງຢູ່ບົນໂລກນີ້.

43. ດູກ່ອນບຸດແຫ່ງພາວະ:

ບົນພື້ນໂລກຂອງເຮົາພະອົງ ຈົ່ງເອີຍເຖິງເຮົາພຣະ
ອົງ ເພື່ອວ່າບົນສະຫວັນຂອງເຮົາພຣະອົງ ເຮົາພຣະ
ອົງອາດຈຳເຈົ້າໄວ້ເພື່ອໃນຕາ ຂອງ ເຮົາພຣະອົງ
ແລະ ຂອງເຈົ້າຈະໄດ້ປອບໂຍນຊຶ່ງກັນ ແລະ ກັນ.

44. ດູກ່ອນບຸດແຫ່ງບັນລັງ:

ການໄດ້ຍິນຂອງເຈົ້າ ຄືການໄດ້ຍິນ ຂອງເຮົາພຣະ
ອົງເຈົ້າຈົ່ງຟັງຈາກເຮົາພຣະອົງເຖີດການເຫັນຂອງ
ເຈົ້າກໍຄື ການເຫັນຂອງເຮົາພຣະອົງ ເຈົ້າຈົ່ງມອງ
ມາທີ່ເຮົາພຣະອົງເຖີດ ເພື່ອວ່າ ໃນຫ້ອງວິນຍານ
ຂອງເຈົ້າ ຈະໄດ້ເປັນສັກຂີຕໍ່ຄວາມໜ້າບູຊາອັນສູງ
ສຸດຂອງເຮົາພຣະອົງ ແລະ ເພື່ອວ່າເຮົາພຣະອົງ
ອາດຈະໄດ້ເປັນສັກຂີຕໍ່ຖານະອັນສູງສົ່ງຂອງເຈົ້າ.

45. ດູກ່ອນບຸດແຫ່ງພາວະ:

ຈົ່ງສະແຫວງຫາ ຄວາມຕາຍທີ່ສະຫຼະ ເພື່ອເພື່ອນມະນຸດ ໃນວິທີທາງຂອງເຈົ້າພຣະອົງ ຈົ່ງຍິນດີໃນຄວາມພໍໃຈຂອງເຈົ້າພຣະອົງ ແລະ ຈົ່ງຂອບໃຈສິ່ງທີ່ເຈົ້າພຣະອົງຈະກໍານົດໃຫ້ ເພື່ອວ່າເຈົ້າອາດຈະໄດ້ພໍານັກຢູ່ກັບເຈົ້າພະອົງ ພາຍໃຕ້ຟາກຟ້າອັນສັກສິດ ຢູ່ ເບື້ອງໜ້າວິຫານແຫ່ງຄວາມຮຸ່ງເຮືອງ.

46. ດູກ່ອນບຸດແຫ່ງມະນຸດ:

ຈົ່ງໄຕ່ຕອງ ແລະຄໍານຶງເຖິງຂໍ້ເປັນຄວາມປາດຖະໜາຂອງເຈົ້າ ຫຼື ທີ່ຈະຕາຍຢູ່ບົນຕຽງ ຫຼື ຈະຍອມສະຫຼະເລືອດ ແລະ ຊີວິດຢູ່ບົນພື້ນທຸລີຢ່າງເປັນຜູ້ອຸທິດແລ້ວ ໃນວິຖີຂອງເຈົ້າພຣະອົງ ດັ່ງນັ້ນ ເຈົ້າຈະກາຍເປັນຜູ້ສະແດງອອກແຫ່ງອໍານາດບັງຄັບບັນຊາຂອງເຈົ້າພຣະອົງ ແລະ ເຈົ້າຈະເປັນຜູ້ເຜີຍແຜ່ຄວາມສະຫວ່າງຂອງເຈົ້າພຣະອົງ ໃຫ້ກະຈາຍໄປເຖິງສະຫວັນສູງສຸດ ດູກ່ອນຜູ້ຮັບໃຊ້ເຈົ້າຈົ່ງຄິດໃຫ້ດີ.

47. ດູກ່ອນບຸດແຫ່ງມະນຸດ :

ຂໍ້ຄວາມງາມຂອງເຮົາພຣະອົງຈົ່ງເປັນພະຍານເຖິດ ຈົ່ງໃຫ້ເສັ້ນຜົມຂອງເຈົ້າ ເປື້ອນດ້ວຍເລືອດ ຂອງເຈົ້ານີ້ ຈະເປັນສິ່ງທີ່ຍິ່ງໃຫຍ່ ໃນສາຍຕາຂອງເຮົາພຣະອົງ ຍິ່ງກ່ວາການສ້າງເອກະພົບ ແລະ ຄວາມສະຫວ່າງ ຂອງໂລກ ທັງສອງ ດູກ່ອນຜູ້ຮັບໃຊ້ ຈົ່ງພຽນພະຍາຍາມເພື່ອບັນລຸສິ່ງນີ້.

48. ດູກ່ອນບຸດແຫ່ງມະນຸດ:

ມີສັນຍາລັກ ສຳລັບທຸກສິ່ງ ສຳລັບສັນຍາລັກ ແຫ່ງຄວາມຮັກ ຄືການຍຶດໝັ້ນຢູ່ພາຍໃຕ້ບັນຊາຂອງເຮົາພຣະອົງ ແລະ ຄວາມອົດທົນ ພາຍໃຕ້ການທົດສອບຈາກເຮົາພຣະອົງ.

49. ດູກ່ອນບຸດແຫ່ງມະນຸດ:

ຜູ້ທີ່ຮັກໂດຍແທ້ນັ້ນຈະຍິນດີຮັບເອົາ ຄວາມທຸກຍາກເຊັ່ນດຽວກັບຜູ້ຄຶດກະບົດຍ່ອມປາດຖະໜາໃນອາໄພໂທດແລະຜູ້ທຳບາບປາດຖະໜາຄວາມກະລຸນາ.

50. ດູກ່ອນບູດແຫ່ງມະນຸດ:

ຫາກວ່າ ຄວາມທຸກຍາກ ບໍ່ເກີດຂຶ້ນກັບເຈົ້າ ໃນວິທີທາງ ຂອງເຮົາພຣະອົງ ເຈົ້າຈະເດີນ ໄປຕາມທາງຂອງຜູ້ທີ່ຍິນດີຢູ່ ກັບເຮົາພຣະອົງ ໄດ້ຢ່າງໃດ ຫາກວ່າ ໃນຄວາມປາດຖະໜາຂອງເຈົ້າ ທີ່ຈະພົບເຮົາພຣະອົງ ເຈົ້າບໍ່ໄດ້ພົບ ຄວາມລໍາບາກ ເຈົ້າຈະບັນລຸເຖິງຄວາມສະຫວ່າງ ໃນຄວາມຮັກ ຂອງເຈົ້າ ເພື່ອຄວາມງາມຂອງເຮົາພຣະອົງໄດ້ແນວໃດ.

51. ດູກ່ອນບຸດແຫ່ງມະນຸດ:

ຄວາມຫາຍຍະນະ ອັນໃຫຍ່ຫຼວງ ຂອງເຮົາພຣະອົງເປັນຄວາມກະລຸນາ ຂອງເຮົາພຣະອົງ ມັນເປັນໄຟແລະ ເປັນຄວາມພະຍາບາດ ໃນພາຍນອກ ແຕ່ວ່າພາຍໃນນັ້ນມັນເປັນແສງ ແລະ ເປັນຄວາມເມດຕາຈົ່ງຮີບໄປຍັງສິ່ງນັ້ນເຖີດເພື່ອເຈົ້າອາດຈະກາຍເປັນແສງສະຫວ່າງ ອັນບໍ່ຮູ້ສິ້ນ ແລະ ເປັນດວງວິນຍານອັນບໍ່ຮູ້ຈັກຕາຍ ນີ້ເປັນບັນຊາຂອງເຮົາ ຕໍ່ເຈົ້າຈົ່ງປະຕິບັດເຖີດ.

52. ດູກ່ອນບຸດແຫ່ງມະນຸດ:

ຫາກວ່າຄວາມຮຸ່ງເຮືອງມາເຖິງເຈົ້າ ຈົ່ງຢ່າໄດ້ປິຕິຍິນດີ ແລະ ຫາກຄວາມຕົກຕ່ຳ ມາເຖິງ ຈົ່ງຢ່າໄດ້ເສົ້າໂສກເສຍໃຈ ເພາະວ່າທັງສອງນີ້ຈະຜ່ານໄປແລະບໍ່ມີເຫຼືອຢູ່ແມ້ແຕ່ຮ່ອງຮອຍ.

53. ດູກ່ອນບຸດແຫ່ງພາວະ :

ຫາກຄວາມຍາກຈົນ ມາເຖິງເຈົ້າ ຈົ່ງຢ່າເສົ້າໂສກເສຍໃຈ ເພາະວ່າຕໍ່ໄປ ເຈົ້າແຫ່ງຄວາມສົມບູນຈະມາເຖິງເຈົ້າ ຢ່າໄດ້ຢ້ານຄວາມຕ່ຳຕ້ອຍ ເພາະວ່າວັນນຶ່ງຄວາມຮຸ່ງເຮືອງຈະມາຢູ່ກັບເຈົ້າ.

54. ດູກ່ອນບຸດແຫ່ງພາວະ :

ຫາກວ່າ ຫົວໃຈຂອງເຈົ້າ ມຸ້ງໄປສູ່ແດນອັນບໍ່ຮູ້ສິ້ນອານາຈັກອັນບໍ່ສິ້ນສຸດ ແລະ ຊີວິດອັນຍັ້ງຍືນຖາວອນ ບໍ່ຮູ້ສິ້ນນີ້ ເຈົ້າຈົ່ງລະຖິ້ມ ສິ່ງທີ່ຕ້ອງຕາຍແລະ ອຳນາດພຽງຊົ່ວຄາວນີ້ເສຍເຖີດ.

55. ດູກ່ອນບຸດແຫ່ງພາວະ:

ຢ່າສາລະວົນຕົວເຈົ້າເອງຢູ່ກັບໂລກນີ້ເພາະວ່າເຮົາ

ພຣະອົງພິສູດທອງດ້ວຍໄຟ ແລະ ເຮົາພຣະອົງພິ
ສູດຜູ້ຮັບໃຊ້ດ້ວຍທອງ.

56. ດູກ່ອນບຸດແຫ່ງມະນຸດ:

ເຈົ້າປະສົງຈະໄດ້ທອງ ແຕ່ເຮົາພຣະອົງຕ້ອງການ
ໃຫ້ເຈົ້າຫລຸດພົ້ນຈາກມັນ ເຈົ້າຄິດວ່າເມື່ອມີທອງ
ເຈົ້າຈະມັ່ງມີແຕ່ເຮົາພຣະອົງເຫັນຄວາມມັ່ງມີຂອງ
ເຈົ້າໃນການຫລຸດພົ້ນຂອງເຈົ້າຈາກມັນ ຂໍໃຫ້ຊີວິດ
ຂອງເຮົາພຣະອົງເປັນສັກຂີພິຍານເຖີດ ບໍ່ຄືສິ່ງທີ່
ເຮົາພຣະອົງຮູ້ ແລະ ບໍ່ຄືຄວາມເພີ້ຝັນຂອງເຈົ້າ
ເຊັ່ນນີ້ ແລ້ວທາງຂອງເຮົາພຣະອົງ ຈະເຂົ້າກັບ
ທາງຂອງເຈົ້າໄດ້ຢ່າງໃດ.

57. ດູກ່ອນບຸດແຫ່ງມະນຸດ:

ຈົ່ງໃຫ້ຄວາມມັ່ງຄັ່ງຂອງເຮົາພຣະອົງແກ່ຜູ້ຍາກຈົນ
ຂອງເຮົາພຣະອົງເພື່ອວ່າໃນສະຫວັນສູ່ເຈົ້າອາດຈະ
ໄດ້ ຄວາມມັ່ງຄັ່ງຈາກຄັງແຫ່ງຄວາມງາມອັນບໍ່ຮູ້
ສິ້ນສຸດ ແລະ ສົມບັດແຫ່ງຄວາມຮຸ່ງເຮືອງອັນບໍ່ດັບ
ສູນ ເຮົາພຣະອົງເປັນສັກຂີໄດ້ວ່າຫາກເຈົ້າຍອມອຸ

ທິດວິນຍານຂອງເຈົ້ານັ້ນ ຈະເປັນສິ່ງທີ່ຮຸ່ງເຮືອງ
ຍິ່ງຂຶ້ນ ຫາກເຈົ້າສາມາດ ພຽງແຕ່ເຫັນດ້ວຍຕາ
ຂອງເຮົາພຣະອົງ.

58. ດູກ່ອນບຸດແຫ່ງມະນຸດ:

ໂບດແຫ່ງພາວະຂອງເຈົ້າ ຄືບັນລັງຂອງເຮົາພຣະ
ອົງ ຈົ່ງໃຫ້ມັນສະອາດຈາກທຸກສິ່ງ ເພື່ອວ່າເຮົາ
ພຣະອົງຈະໄດ້ຢູ່ກັບເຈົ້າໄດ້.

59. ດູກ່ອນບຸດແຫ່ງພາວະ:

ຫົວໃຈຂອງເຈົ້າຄືທີ່ຢູ່ຂອງເຮົາພຣະອົງ ຈົ່ງທຳມັນ
ໃຫ້ບໍລິສຸດ ເພື່ອເຮົາພຣະອົງຈະໄດ້ໄປຢູ່ ໃນວິນຍານ
ຂອງເຈົ້າ ຄືທີ່ ທີ່ເຮົາພຣະອົງຈະປະກົດຕົວເຮົາ
ພຣະອົງຈົ່ງທຳໃຫ້ມັນສະອາດ ເພື່ອການສະແດງ
ອອກຂອງເຮົາ.

60. ດູກ່ອນບຸດແຫ່ງມະນຸດ:

ຈົ່ງເອົາມືຂອງເຈົ້າມາຢູ່ໃນສ່ວນອົກ ຂອງເຮົາພຣະ
ອົງ ເພື່ອວ່າເຮົາພຣະອົງຈະໄດ້ໄປປະກົດຊຸດຢູ່ນະ

ເບື້ອງບົນຂອງເຈົ້າດ້ວຍລັດສະໝີອັນຮຸ່ງເຮືອງ.

61. ດູກ່ອນບຸດແຫ່ງມະນຸດ:

ຈົ່ງຂຶ້ນມາຍັງສະຫວັນພິມຂອງເຮົາພຣະອົງ ເພື່ອວ່າເຈົ້າອາດໄດ້ກັບມາຢູ່ຮ່ວມກັບເຮົາພຣະອົງດ້ວຍຄວາມປິຕິ ແລະຈາກຖ້ວຍແຫ່ງຄວາມອຳໄພ ອັນບໍ່ຮູ້ສິ້ນ ເຈົ້າຈະໄດ້ດື່ມນ້ຳອຳມະລິດທີ່ຫາອັນປຽບບໍ່ໄດ້.

62. ດູກ່ອນບຸດແຫ່ງມະນຸດ:

ວັນເວລາ ໄດ້ຜ່ານເຈົ້າໄປຫຼາຍວັນແລ້ວ ຂະນະທີ່ເຈົ້າຍັງຫຍຸ້ງຢູ່ກັບຄວາມເພີ້ຝັນຂອງເຈົ້າ ເຈົ້າຈະສະລົບສະໄຫຼຢູ່ເຊັ່ນນີ້ອີກໄປນານຈັກເທົ່າໃດ ຈົ່ງຍົກຫົວຂອງເຈົ້າຂຶ້ນ ຈາກການຫຼັບນອນ ເພາະເຫດວ່າດວງຕາວັນໄດ້ຂຶ້ນເຖິງທີ່ສຸດແລ້ວ ບາງທີເຈົ້າອາດຈະໄດ້ຮັບແສງອັນງາມຈາກດວງຕາວັນໄດ້.

63. ດູກ່ອນບຸດແຫ່ງມະນຸດ:

ຈາກຂອບຟ້າ ຊຶ່ງພູເຂົາອັນສັກສິດທີ່ຕັ້ງຢູ່ ແສງໄດ້

ສາດມາຍັງເຈົ້າແລ້ວແລະອິນຍານແຫ່ງການຮູ້ແຈ້ງ ໄດ້ຫາຍໃຈເຂົ້າໄປ ໃນທີ່ຕົວໃຈຂອງເຈົ້າແລ້ວ. ຈົ່ງທຳຕົວໃຫ້ພົ້ນຈາກຄວາມເພັ້ຝັນເກີດ ແລະ ເຂົ້າມາຍັງທີ່ພັກຂອງເຈົ້າພຣະອົງ ເພື່ອວ່າ ເຈົ້າອາດຈະໄດ້ຢູ່ໃນຊີວິດອັນບໍ່ຮູ້ສິ້ນສຸດ ແລະ ມີຄ່າຄວນ ແກ່ການພົບເຈົ້າພຣະອົງແລ້ວ ຄວາມຕາຍ ຄວາມອິດເມື່ອຍ ແລະ ຄວາມຫຍຸ້ງຍາກອາດບໍ່ມາເຖິງເຈົ້າອີກ.

64. *ດູກ່ອນບຸດແຫ່ງມະນຸດ :*

ຄວາມບໍ່ຮູ້ສິ້ນຂອງເຈົ້າພຣະອົງ ຄືການເນລະມິດຂອງເຈົ້າພຣະອົງ ເຈົ້າພຣະອົງ ໄດ້ສ້າງມັນຂຶ້ນມາເພື່ອເຈົ້າຂໍໃຫ້ພາວະຂອງເຈົ້າ ໄດ້ສວມໃສ່ ຄວາມບໍ່ຮູ້ສິ້ນຫວ່ານີ້ເກີດຄວາມເປັນເອກະພາບເປັນງານທີ່ເຈົ້າໄດ້ສ້າງຂຶ້ນເພື່ອເຈົ້າ ຈົ່ງເອົາໄປປະດັບເກີດເພື່ອວ່າເຈົ້າຈະໄດ້ເປີດເຜີຍ ຄວາມບໍ່ຮູ້ສິ້ນ ຂອງເຈົ້າພຣະອົງ.

65. *ດູກ່ອນບຸດແຫ່ງມະນຸດ :*

ເຈົ້າພະອົງໃຫ້ອະນຸພາບ ຂອງເຈົ້າພຣະອົງ ເປັນກຳ

ບັນແກ່ເຈົ້າ ແລະ ເຣົາພຣະອົງ ມອບສີສະງ່າຂອງເຣົາພຣະອົງ ໃຫ້ເປັນການສະແດງ ຄວາມກະລຸນາຂອງເຣົາຕໍ່ເຈົ້າ ສິ່ງຊຶ່ງສົມຄວນ ກັບເຣົາພຣະອົງນັ້ນບໍ່ມີຜູ້ໃດເຂົ້າໃຈໄດ້ ແລະ ບໍ່ມີຜູ້ໃດ ບັນຍາຍໄດ້ໂດຍແທ້ທີ່ດຽວ. ເຣົາພຣະອົງໄດ້ຮັກສາມັນໄວ້ນະທີອັນລຶກລັບ ໃຫ້ເປັນຂຸມຊັບໃນບັນຊາຂອງເຣົາພຣະອົງ. ສຳລັບທີ່ເຣົາພຣະອົງຈະສະແດງໃຫ້ເປັນຄວາມກະລຸນາ ແກ່ບັນດາຜູ້ຮັບໃຊ້ ເຣົາພຣະອົງ ແລະເປັນຄວາມເມດຕາທີ່ເຣົາພຣະອົງ ຈະໃຫ້ແກ່ປະຊາກອນຂອງເຣົາພຣະອົງ.

66. *ດູກ່ອນເດັກໆແຫ່ງພຣະຜູ້ເປັນເຈົ້າ ແລະຜູ້ມີສາລະແຫ່ງທິບ :*

ເຈົ້າອາດຈະຖືກຂັດຂວາງ ບໍ່ໃຫ້ມາຮັກເຣົາພຣະອົງແລະ ດວງວິນຍານຕ່າງໆ ອາດຈະຕ້ອງຫວັ່ນໄຫວໃນເມື່ອເອີ່ຍເຖິງເຣົາພຣະອົງ ເພາະເຫດວ່າຈິດໃຈທັງຫຼາຍ ບໍ່ສາມາດເຂົ້າໃຈ ເຣົາພຣະອົງໄດ້ ແລະ ບໍ່ມີຫົວໃຈທີ່ຈະບັນລຸເຣົາພຣະອົງໄດ້.

67. ດູກ່ອນບຸດແຫ່ງຄວາມງາມ :

ດ້ວຍວິນຍານຂອງເຮົາພຣະອົງ ແລະ ຄວາມປານີ ຂອງເຮົາພຣະອົງ ດ້ວຍຄວາມເມດຕາ ຂອງເຮົາ ພຣະອົງ ແລະ ດ້ວຍຄວາມງາມ ຂອງເຮົາພຣະອົງ ທັງໝົດນີ້ ເຮົາພຣະອົງໄດ້ເຜີຍໃຫ້ເຈົ້າຮູ້ດ້ວຍລີ້ນ ແຫ່ງກຳລັງ ແລະ ໄດ້ຂຽນເພື່ອເຈົ້າ ດ້ວຍປາກກາ ແຫ່ງອຳນາດນັ້ນ ໄດ້ເປັນໄປຕາມສົມຄວນແກ່ຄວາມ ສາມາດຂອງເຈົ້າ ຄວາມເຂົ້າໃຈຂອງເຈົ້າບໍ່ແມ່ນ ຕາມຖານະຂອງເຮົາພຣະອົງ ແລະ ຄວາມໄພເລາະ ແຫ່ງສຳນຽງຂອງເຮົາພຣະອົງ.

68. ດູກ່ອນເດັກທັງຫຼາຍຂອງມະນຸດ :

ເຈົ້າບໍ່ຮູ້ຫຼືວ່າເຫດໃດເຮົາພຣະອົງສ້າງເຈົ້າທັງປວງ ຈາກທຸລີດຽວກັນເຮົາພຣະອົງ ທຳດັ່ງນີ້ເພື່ອບໍ່ໃຫ້ຜູ້ ໃດ ຍົກຕົວຂຶ້ນເໜືອຜູ້ອື່ນ ໃຫ້ຄຳນຶງໄວ້ຕະຫຼອດ ເວລາໃນຫົວໃຈຂອງເຈົ້າວ່າ ເຈົ້າຖືກສ້າງຂຶ້ນມາໄດ້ ຢ່າງໃດ ເພາະວ່າເຮົາພຣະອົງໄດ້ສ້າງເຈົ້າທັງປວງ ຈາກທາດດຽວກັນ ເຈົ້າຈະຕ້ອງເປັນສະເໝືອນວິນ

ຍານ ອັນດຽວກັນ ຍ່າງດ້ວຍຕີນ ອັນດຽວກັນ ກິນດ້ວຍປາກອັນດຽວກັນ ແລະ ອາໃສຢູ່ໃນແດນດຽວກັນເພື່ອວ່າ ດ້ວຍການກະທຳຕ່າງໆຂອງເຈົ້າ ສັນຍານແຫ່ງ ຄວາມເປັນໜຶ່ງແລະ ສາລະ ແຫ່ງ ການຫຼຸດພົ້ນ ຈະໄດ້ສະແດງໃຫ້ປະກົດ ຈາກພາວະພາຍໃນສຸດ ຂອງເຈົ້າຄື ຄຳແນະນຳຂອງເຮົາພຣະອົງຕໍ່ເຈົ້າ ຈົ່ງຮັບຟັງ ຄຳແນະນຳນີ້ ເພື່ອເຈົ້າທັງຫຼາຍອາດຈະໄດ້ຮັບ ຜົນລະໄມ້ແຫ່ງຄວາມສັກສິດ ຈາກຕົ້ນໄມ້ ແຫ່ງ ຄວາມຮຸ່ງເຮືອງອັນມະຫັດສະຈັນ.

69. *ດູກ່ອນເຈົ້າຜູ້ເປັນບຸດແຫ່ງຈິດວິນຍານ:*

ເຈົ້າທັງຫຼາຍຄືສິນບັດຂອງເຮົາພຣະອົງ ເພາະເຫດວ່າ ໃນຕົວເຈົ້າເຮົາພຣະອົງ ໄດ້ສ້າງໄຂ່ມຸກ ແຫ່ງຄວາມລຶກລັບຂອງເຮົາພຣະອົງ ແລະ ມະນີແຫ່ງປັນຍາ ຂອງເຮົາພຣະອົງໄວ້ ຈົ່ງຮັກສາສິ່ງເຫຼົ່ານີ້ໄວ້ຈາກຄົນແປກໜ້າ ທ່າມກາງຜູ້ຮັບໃຊ້ຂອງເຮົາ ແລະຈາກຄົນທີ່ບໍ່ມີສິນລະທຳທ່າມກາງປະຊາກອນ ຂອງເຮົາພະອົງ.

70. ດູກ່ອນບຸດ ຜູ້ຊຶ່ງຢືນຢູ່ດ້ວຍຕົນເອງ ໃນອານາຈັກ ຂອງຕົນເອງ:

ຈົ່ງຮູ້ເຖີດວ່າເຮົາພຣະອົງ ໄດ້ໂຮຍຄວາມຫອມຫວນ ແຫ່ງຄວາມສັກສິດມາທີ່ເຈົ້າແລ້ວ ແລະໄດ້ເປີດເຜີຍ ໃຫ້ເຈົ້າ ໄດ້ເຫັນຄຳຂອງເຮົາພຣະອົງ ຢ່າງເຕັມທີ່ ແລະ ໄດ້ເຮັດໃຫ້ຄຳເມດຕາ ຂອງເຮົາພຣະອົງນັ້ນ ສົມບູນໃນຕົວເຈົ້າ ແລະ ເຮົາພຣະອົງໄດ້ປະສົງທີ່ ຈະໃຫ້ເຈົ້າໄດ້ ໃນສິ່ງຊຶ່ງເຮົາປະສົງສຳລັບຕົວຂອງ ເຮົາພຣະອົງ ດັ່ງນັ້ນຈົ່ງພໍໃຈເຖີດກັບຄວາມປະສົງ ຂອງເຮົາ ແລະ ຈົ່ງໃຫ້ຄວາມຂອບໃຈຕໍ່ເຮົາ.

71. ດູກ່ອນບຸດແຫ່ງມະນຸດ:

ເຈົ້າຈົ່ງຂຽນທຸກຢ່າງ ຊຶ່ງເຮົາພຣະອົງໄດ້ເປີດເຜີຍ ແກ່ເຈົ້າ ດ້ວຍມຶກແຫ່ງຄວາມສະຫວ່າງບົນແຜ່ນ ສິລາແຫ່ງວິນຍານຂອງເຈົ້າ ຫາກວ່າສິ່ງນີ້ບໍ່ຢູ່ໃນອຳ ນາດຂອງເຈົ້າ ແລ້ວ ຈົ່ງທຳໃຫ້ມຶກຂອງເຈົ້າເປັນສາ ລະຂອງຫົວໃຈຂອງເຈົ້າ ຖ້າເຈົ້າບໍ່ອາດສາມາດທຳ

ເຊັ່ນນີ້ໄດ້ແລ້ວ. ຈົ່ງຂຽນດ້ວຍມຶກສີແດງເຂັ້ມຊຶ່ງທີ່ໃຫຍ່ໃນທາງຂອງເຮົາພຣະອົງ ສິ່ງອື່ນທັງປວງບໍ່ຊື່ນຊົມເຮົາພຣະອົງ ຍິ່ງກ່ວານີ້ ເພື່ອແສງຂອງມັນອາດຄົງທົນຢູ່ຕລອດໄປ.



## II. ຈາກປາກາສິດຂອງພຣະຜູ້ເປັນເຈົ້າ ຜູ້ມີອຳນາດ

1. ດູກ່ອນເຈົ້າທັງຫລາຍຜູ້ມີໃຈທີ່ຈານິກໄດ້ ແລະ ມີຫູທີ່ຈະຟັງໄດ້ສຽງຮ້ອງຂອງພະຜູ້ເປັນເຈົ້າ

ປະການທຳອິດນັ້ນຄື: ຢ່າໄດ້ພະນັກນະທີ່ອື່ນ ບອກຈາກສວນກຸຫຼາບແຫ່ງທຳນະ ຢ່າໄດ້ຫາທີ່ເພິ່ງອາສັຍນະທີ່ອື່ນບອກຈາກພຣະຜູ້ເປັນເຈົ້າ ຈິ່ງຢ່າໄດ້ເພິ່ງອາໃສສິ່ງໃດອື່ນບອກຈາກໃນຄວາມສັດທາດ້ວຍປີກຂອງເຈົ້າ ເຈົ້າຈິ່ງໄດ້ບິນໄປຍັງອານາຈັກ ອັນບໍ່ມີຂອບເຂດແລະຈິ່ງໄປພະນັກຢູ່ທີ່ດັ່ງກ່າວນັ້ນອັນເປັນຈຸດໝາຍຂອງເຈົ້າ.

2. ດູກ່ອນບຸດແຫ່ງທຳມະ:
ນົກສະແຫວງຫາຮັງຂອງມັນສະແຫວງຫາເສັ້ນສາຍຈາກດອກກຸຫຼາບສ່ວນຫົວໃຈ ຂອງຄົນນັ້ນພໍໃຈຢູ່ກັບຫຼືອັນຈະໝົດສິ້ນໄປແລະຫັນເຫໄປຈາກຮັງອັນເປັນອະມັນຕະການ ເຂົາຈະຫັນສາຍຕາໄປສາຈາກເຮົາພຣະອົງ ແລະ ຈະຖືກພາກໄປຈາກຄວາມເປັນຢູ່ອັນ

ເປັນທິບອະນິຈາ ໜ້າປະຫຼາດ ແລະ ໜ້າສົງສານພຽງ
ໃດ ເຂົາຈາກໄປທະເລຫຼວງຂອງພຣະຜູ້ເປັນເຈົ້າ
ແລະ ໄປສະແຫວງຫານ້ຳໃນຈອກນ້ອຍ ແລະ ເຂົາ
ປິດສາຍຕາເສຍຈາກຂອບຟ້າອັນອຳໄພ.

3. *ດູກ່ອນສະຫາຍ:*

ໃນອຸດທະຍານແຫ່ງຫົວໃຈຂອງເຈົ້ານັ້ນ ຢ່າໄດ້ປູກ
ຜັງສິ່ງໃດນອກຈາກກຸຫຼາບແຫ່ງຄວາມຮັກ ແລະ ຢ່າ
ໄດ້ປ່ອຍໃຫ້ນົກ ໃນກົ່ງຄອນແຫ່ງຄວາມອາລືລຸດໄປ
ເສຍຈົ່ງປະຄັບປະຄອງຄວາມເປັນສະຫາຍກັບຜູ້ປະ
ພຶດຕິແລະ ຈົ່ງຫຼີກລ້ຽງການບັງຄັບທຳນະທັງຫຼາຍ.

4. *ດູກ່ອນບຸດແຫ່ງຄວາມຍຸດຕິທຳ:*

ດິນທີ່ຮັກຈະໄປທີ່ໃດລະ ນອກຈາກດິນແດນທີ່ເຂົາ
ຮັກ ແລະ ຜູ້ທີ່ສະແຫວງ ດິນໃດລະຈະເປັນສຸກຫາກ
ບໍ່ໄດ້ພົບສິ່ງທີ່ເຂົາສະແຫວງ ສຳຫຼັບຜູ້ທີ່ຮັກໂດຍແທ້
ຈິງ ການໄດ້ຢູ່ຮ່ວມຊີວິດ ແລະ ການພົດພາກຄືການ
ຕາຍ ທະນົງໜ້າອິກເຂົາຈະໝົດຄວາມອົດທົນ ແລະ
ຫົວໃຈຂອງເຂົາຈະບໍ່ມີຄວາມສະງົບ ເຖິງເຂົາຈະ

ຕາຍຈັກຊີວິດ ເຂົາກໍ່ຈະຍອມເພື່ອທີ່ຈະໄດ້ໄປເຖິງ
ນະສະຖານຖິ່ນຂອງຜູ້ທີ່ເຂົາຮັກ.

5. ດູກ່ອນບຸດແຫ່ງທຸລີ:

ເຮົາພຣະອົງຊົ່ງບອກເຈົ້າໄວ້ດັ່ງນີ້ ໃນບັນດາຄົນທັງ
ຫຼາຍ ຜູ້ທີ່ລັ່ງເລນັ້ນຄືຜູ້ທີ່ໂຕ້ແຍ້ງໃຮ້ຄວາມມຸ້ງໝາຍ
ແລະ ສະແຫວງທີ່ຈະເກີນພີ່ນ້ອງຂອງເຂົາດູກ່ອນ
ເພື່ອນທັງຫຼາຍ ທຸກຄົນຈົ່ງໃຫ້ການ ກະທໍາເປັນອາ
ການຂອງເຈົ້າບໍ່ແມ່ນຄໍາເວົ້າ.

6. ດູກ່ອນບຸດໃນພີພົບ

ຈົ່ງຮູ້ໂດຍແນ່ນອນເຖິງວ່າໃນຫົວໃຈທີ່ຍັງມີ ຄວາມ
ລຶດສະຫຍາເຫຼືອຢູ່ນັ້ນຈະບໍ່ໄປສູ່ອານາຈັກອັນບໍ່ຮູ້ສິ້ນ
ສຸດຂອງເຮົາພຣະອົງ ແລະ ຈະບໍ່ໄດ້ສູດດົມ ຄວາມ
ຫອມຫວານແຫ່ງຄວາມບໍລິສຸດ ທີ່ສົ່ງກິ່ນຫອມ ໄປ
ຈາກດິນແດນອັນບໍລິສຸດຂອງເຮົາພຣະອົງ

7. ດູກ່ອນບຸດແຫ່ງໄມຕີ

ອີກກ້າວດຽວເທົ່ານັ້ນເຈົ້າກໍ່ຈະໄປເຖິງຍັງຄວາມໄພ
ໂລດອັນສູງສຸດເບື້ອງບົນ ແລະ ຍັງແຫ່ງຄວາມຮັກ

ຈົ່ງກ້າວໄປແລ້ວ ເຈົ້າຈະໄປເຖິງຍັງດິນແດນອຳມະຕະ ແລະ ເຂົ້າໄປຢູ່ໃນວິຫານແຫ່ງອານັນຕະການດັ່ງນັ້ນຈົ່ງເອົາໃຈໃສ່ຕໍ່ຄຳຊຶ່ງສາສະດາໄດ້ເປີດເຜີຍໄວ້.

໘. ດູກ່ອນບຸດແຫ່ງຄວາມໄພໂຣດ:

ຈົ່ງລອດເລາະໃນຫົນທາງແຫ່ງວິສຸດທິ ແລະ ຈົ່ງເຂົ້າໄປໃນ ຈົ່ງສຳລະຫົວໃຈຂອງເຈົ້າ ດ້ວຍຄວາມຮ້ອນແຫ່ງທຳມະ ແລະ ຈົ່ງເຂົ້າໄປຢູ່ໃນວັງຂອງພຣະຜູ້ເປັນເຈົ້າ.

໙. ດູກ່ອນເງົາທີ່ລ່ອງລອຍໄປ:

ຈົ່ງຂ້າມໃຫ້ພົ້ນພາວະແຫ່ງຄວາມສົງໃສ ອັນຕ່ຳຊ້າ ແລະຈົ່ງຂຶ້ນໄປສູ່ຄວາມແນ່ນອນທີ່ຢູ່ສູງສຸດ ຈົ່ງເປີດສາຍຕາຕໍ່ສັດຈະທຳເພື່ອວ່າ ເຈົ້າອາດຈະໄດ້ເຫັນຄວາມງາມທີ່ມິໄດ້ຖືກປິດບັງແລະຈະໄດ້ຮ້ອງປະກາດຂຶ້ນວ່າ ພຣະຜູ້ເປັນເຈົ້າ ເປັນທີ່ເພິ່ງສັກກາຣະເປັນຜູ້ສູງສຸດຂອງຜູ້ສ້າງທັງປວງ.

10. ດູກ່ອນບຸດແຫ່ງຄວາມປາດຖະໜາ:

ຈົ່ງສົນໃຈຕໍ່ສິ່ງນີ້ດວງຕາຂອງມະນຸດນັ້ນບໍ່ອາດທີ່ຈະ

ໄດ້ເຫັນຄວາມງາມ ອັນເປັນອຳນະຕະໄດ້ ແລະ ຫົວໃຈທີ່ໄຮ້ຊີວິດນັ້ນຈະພໍໃຈຢູ່ ແຕ່ໃນຄວາມເປົ່ງບານທີ່ຈະຫ່ຽວແຫ້ງໄປ ເພາະວ່າສິ່ງທີ່ເໝືອນກັນຍ່ອມສະແຫວງສິ່ງເໝືອນກັນແລະຈະພໍໃຈໃນການຢູ່ຮ່ວມກັບປະເພດດຽວກັບເຂົາ.

11. *ດູກ່ອນບຸດແຫ່ງຫຸລີ:*

ຈົ່ງປິດຕາ ຂອງເຈົ້າເສຍ ເພື່ອວ່າເຈົ້າຈະໄດ້ເຫັນຄວາມງາມ ຂອງເຮົາພຣະອົງ ຈົ່ງປິດຫູຂອງເຈົ້າເສຍ ເພື່ອວ່າເຈົ້າຈະໄດ້ ຍິນສຽງ ປະສານ ອັນໄພເຣາະຂອງບ້າຄຳຂອງເຮົາພຣະອົງ ຈົ່ງສະລັດສິ່ງຮຽນຮູ້ຂອງເຈົ້າທັງໝົດ ເພື່ອວ່າເຈົ້າອາດຈະໄດ້ຮັບຄວາມຮູ້ຂອງເຮົາພຣະອົງ ແລະ ຈົ່ງທຳໃຫ້ເຈົ້າອອກຈາກຄວາມມັ່ງຄັ່ງທັງມວນ ເພື່ອວ່າເຈົ້າອາດຈະໄດ້ຮັບສ່ວນແບ່ງອັນຖາວອນ ໄປຈາກທ້ອງທະເລແຫ່ງຄວາມມັ່ງຄັ່ງອັນບໍ່ຮູ້ສິ້ນສຸດຂອງເຮົາພຣະອົງປິດຕາຂອງເຈົ້າຈາກສິ່ງທັງປວງນອກຈາກຄວາມງາມຂອງເຮົາພຣະອົງ ປິດຫູຂອງເຈົ້າຈາກສິ່ງທັງປວງນອກ

ຈາກວາທະຂອງເຮົາພຣະອົງສະລັດຄວາມຮູ້ທັງປວງ ນອກຈາກຄວາມຮູ້ໃນເຮົາ ດ້ວຍສາຍ ຕາ ຊຸດ ເຈນ ດ້ວຍຫົວໃຈອັນບໍລິສຸດແລະດ້ວຍຫູອັນສົນໃຈ ເຈົ້າ ອາດຈະໄດ້ເຂົ້າມາໃນວິຫານ ແຫ່ງຄວາມວິສຸທິຂອງ ເຮົາພຣະອົງ.

12. *ດູກ່ອນມະນຸດຜູ້ ມີສອງຕາ:*

ຈົ່ງປິດຕານຶ່ງ ແລ້ວເປີດອີກຕານຶ່ງ ຈົ່ງປິດຕານຶ່ງ ເສຍຈາກໂລກ ແລະ ທັງໝົດທີ່ຢູ່ໃນໂລກ ແລະ ຈົ່ງ ເປີດອີກຕານຶ່ງ ເພື່ອຄວາມງາມອັນບໍລິສຸດ ຂອງຜູ້ ເປັນທີ່ຮັກ.

13. *ດູກ່ອນທາຣິກຂອງເຮົາທັງຫຼາຍ:*

ເຮົາພຣະອົງກ່າວວ່າ ເມື່ອຖືກກະຈາຍສຽງປະສານ ແຫ່ງວິກິດຈາກສະຫວັນແລ້ວ ເຈົ້າຈະຈົມດິ່ງໄປສູ່ ຄວາມເສື່ອມສູນໄປໂດຍສິ້ນເຊີງ ແລະ ເມື່ອເຈົ້າບໍ່ ໄດ້ ເຫັນຄວາມງາມຈາກກຸຫຼາບແລ້ວ ເຈົ້າກໍ່ຈະກັບ ໄປສູ່ນ້ຳ ແລະໂຄນຕົມ.

14. *ດູກ່ອນສະຫາຍທັງຫຼາຍ :*

ຢ່າລະຖິ້ມຄວາມງາມ ອັນບໍ່ສິ້ນສຸດ ເພື່ອຄວາມງາມ ທີ່ຈະຕ້ອງຖືກທຳລາຍໄປ ແລະ ຢ່າໄດ້ຫັນໄປມີຄວາມ ຮັກໃນໂລກ ແຫ່ງ ທຸລີຊຶ່ງຈະຕ້ອງເສື່ອມສູນໄປ.

15. *ດູກ່ອນບຸດແຫ່ງຈິດໃຈ*

ເວລາໄດ້ມາເຖິງແລ້ວເມື່ອໃນຕຶ່ງດອນ ແຫ່ງຄວາມ ບໍລິສຸດ ຈະບໍ່ເຜີຍແຜ່ອີກຕໍ່ໄປ ຊຶ່ງຄວາມລີ້ລັບພາຍ ໃນ ແລະ ຈາກນັ້ນເຈົ້າຈະຕ້ອງຖືກກະຈາຍສຽງປະ ສານແຫ່ງ ສວງສະຫວັນແລະນ້າສຽງຈາກເບື້ອງບົນ ທັງປວງ.

16. *ດູກ່ອນສາລະແຫ່ງຄວາມປະມານ :*

ວາທະອັນດຽວກັນນັ້ນ ໄດ້ມີລີ້ນ ແຫ່ງຄວາມລີ້ລັບຈຳ ນວນມາກມາຍ ແລະ ສຽງປະສານ ອັນດຽວ ກັນນັ້ນ ໄດ້ເປີດເຜີຍຂຶ້ນ ໂດຍຄວາມລີ້ລັບທີ່ຊ້ອນເລັ້ນ ຢູ່ຈຳ ນວນຫລວງຫລາຍ ແຕ່ໃນນັ້ນກໍດີ ໜ້າເສຍດາຍ ທີ່ບໍ່ມີ ຫູໃດຟັງ ແລະ ບໍ່ມີຫົວໃຈໃດ ທີ່ຈະເຂົ້າໃຈ.

17. *ດູກ່ອນສະຫາຍທັງຫຼາຍ :*

ປະຕູທີ່ເປີດໄປສູ່ແດນອັນບໍ່ມີສິ້ນສຸດນັ້ນ ເປີດກວ້າງ

ຢູ່ແລ້ວ ແລະ ທີ່ພັກຂອງຜູ້ເປັນທີ່ຮັກ ໄດ້ປະດັບແລ້ວ ດ້ວຍເລືອດຂອງຜູ້ທີ່ມີຄວາມຮັກ ແຕ່ເຖິງໃນນັ້ນຄົນທັງປວງ ກໍຍັງພັດພາກໄປຈາກນະຄອນແຫ່ງຄວາມປານີ ຍົກເວັ້ນ ແຕ່ບາງຄົນເທົ່ານັ້ນ ແລະ ເຖິງແມ່ນວ່າ ໃນໝູ່ຄົນບາງຄົນນີ້ ກໍມີຈໍານວນນ້ອຍທີ່ສຸດ ທີ່ມີຫົວໃຈອັນບໍລິສຸດ ແລະ ມີຈິດໃຈທີ່ໄດ້ສໍາລະແລ້ວ.

18. ດູກ່ອນເຈົ້າທັງຫຼາຍຜູ້ອາໃສໃນສະຫວັນອັນສູງສຸດ: ຈົ່ງປະກາດ ໄປຍັງທາຣົກ ຜູ້ເບິ່ງໄປຂາງໜ້າ ດ້ວຍຄວາມຫວັງວ່າ ພາຍໃນອານາຈັກອັນທົງສີໄກ້ກັບສະຫວັນຟາກຟ້າພຸ້ນ ສວນໃໝ່ ແຫ່ງໜຶ່ງ ໄດ້ບັງເກີດຂຶ້ນ ຊຶ່ງພາຍໃນສວນນີ້ ປະຊາກອນ ແຫ່ງ ອານາຈັກ ໄດ້ເດີນໄປມາຢູ່ ແລະ ມີອໍານະຕະຊົບ ຢູ່ໃນສະຫວັນ ອັນສູງນັ້ນ ຈົ່ງພະຍາຍາມເຖີດເພື່ອວ່າເຈົ້າຈະໄດ້ບັນລຸຍັງຖານະ ເຊັ່ນນັ້ນ ແລະ ເພື່ອວ່າ ເຈົ້າຈະໄດ້ເຂົ້າໄປສູ່ຄວາມລີ້ລັບ ຂອງຄວາມຮັກຈາກກິ່ນຫອມອັນເຊີດເຊີຍມາ ແລະ ໄດ້ຮຽນຮູ້ ຄວາມສະຫຼາດອັນເປັນພິດຈາກຜົນທີ່ບໍ່ເປັນອະມັນຕະການ ສາຍຕາຂອງຜູ້ໃດ

ທີ່ໄດ້ເຂົ້າໄປ ແລະ ເຂົ້າຢູ່ໃນສ່ວນນັ້ນ ຈະໄດ້ຮັບ
ຄວາມຊື່ນຊົມ.

19 *ດູກ່ອນເພື່ອນທັງຫຼາຍຂອງເຮົາພຣະອົງ ;*
ເຈົ້າລືມຮຸ່ງເຊົ້າ ອັນແຈ່ມໃສ ອັນແທ້ຈິງນັ້ນເສຍ
ແລ້ວຫຼື ເມື່ອເຈົ້າທັງຫຼາຍ ໄປຢູ່ຮ່ວມກັບ ນະເບື້ອງ
ໜ້າ ເຮົາພຣະອົງໃຕ້ຮົ່ມເງົາແຫ່ງຊີວິດ ອັນເປັນໜຶ່ງ
ຕົ້ນໄມ້ທີ່ປູກຢູ່ໃນສະຫວັນອັນຮຸ່ງເຮືອງນັ້ນ ແລະ ນະ
ທີ່ນັ້ນ ເຈົ້າທັງປວງແວດລ້ອມ ຢູ່ໃນ ຄວາມບໍລິສຸດ
ເຈົ້າລືມເສຍແລ້ວຫຼືວ່າ ເມື່ອເຈົ້າຟັງດ້ວຍຄວາມຕະ
ຫຼຶກ ຂະນະທີ່ເຮົາພຣະອົງ ໄດ້ກ່າວຄໍາອັນບໍລິສຸດ ທີ່
ສຸດທັງສາມນີ້ ອອກໄປວ່າ ດູກ່ອນ ເຈົ້າທັງຫຼາຍ
ຢ່າໄດ້ນິຍົມໃນໃຈຂອງເຈົ້າເອງ ຫຼາຍກ່ວາຂອງເຮົາ
ພຣະອົງຢ່າໄດ້ປະສົງສິ່ງ ຊຶ່ງເຮົາພຣະອົງ ໄດ້ປະສົງ
ສໍາລັບເຈົ້າ ແລະ ຢ່າໄດ້ເຂົ້າມາໃກ້ເຮົາ ພຣະອົງ
ດ້ວຍຫົວໃຈທີ່ໄຮ້ຊີວິດ ແລະ ປຽບດ້ວຍ ຄວາມປາດ
ຖະໜາ ແລະ ຄວາມໃຝ່ຝັນ ທາງໂລກ ພຽງແຕ່ເຈົ້າ
ກະທໍາໃຫ້ດວງໃຈຂອງເຈົ້າ ບໍລິສຸດໃນຂະນະນີ້ ເຈົ້າ

ກໍຈະລະລຶກໄດ້ ເຖິງສະຖານທີ່ ແລະ ສິ່ງແວດລ້ອມທີ່ ວ່ານັ້ນ ແລະ ສັດຈະແຫ່ງວາຈາ ຂອງເຮົາ ພຣະອົງ ຈະເປັນທີ່ປະທັບໃຈ ແກ່ພວກເຈົ້າທັງປວງ.

20. ດູກ່ອນເຈົ້າທັງປວງທີ່ງົມງວຍ ຢູ່ໃນປັກແຫ່ງຄວາມ ຫລັບໄຫລ ເໝືອນຜູ້ທີ່ຕາຍແລ້ວ

ອາຍຸໄຂ ໄດ້ຜ່ານໄປແລ້ວ ແລະຊີວິດອັນມີຄ່າຂອງ ເຈົ້າ ກໍໃກ້ຈະເຖິງທີ່ສິ້ນສຸດແຕ່ໃນນັ້ນ ກໍຕາມຄວາມ ບໍລິສຸດ ແມ້ແຕ່ເລັກນ້ອຍ ຈະພັດຜ່ານຈາກເຈົ້າ ມາ ສູ່ວິຫານ ຂອງເຮົາພຣະອົງກໍຫາບໍ່ໄດ້ ເຖິງແມ່ນວ່າ ເຈົ້າຈະຈົມ ຢູ່ໃນສະໝຸດແຫ່ງຄວາມບໍ່ເຊື່ອຖື ແຕ່ວ່າ ລົ້ນຂອງເຈົ້າ ກໍຍັງບອກວ່າມີຄວາມເຊື່ອຢູ່ໃນພຣະ ເປັນເຈົ້າ ເຮົາພຣະອົງ ກຽດຊັງຜູ້ໃດ ເຈົ້າກໍຮັກຜູ້ ນັ້ນ ສັດຕູຂອງເຮົາພຣະອົງເຈົ້າກໍເອົາໄປເປັນເພື່ອນ ແຕ່ແລ້ວ ເຈົ້າຍັງດີງເດີນຢູ່ ບົນພື້ນໂລກຂອງເຮົາ ຢ່າງສະບາຍ ໂດຍບໍ່ຄຶດເຖິງວ່າ ພື້ນດິນຂອງເຮົາ ນັ້ນລະອາຮັກຂາໃນເຈົ້າ ແລະ ທຸກສິ່ງທຸກຢ່າງໃນ ພື້ນດິນ ຂອງເຮົາພຣະອົງປະຕິເສດ-ເຈົ້າ ຫາກພຽງ ແຕ່ເຈົ້າ ຈະເປີດຕາຂອງເຈົ້າ ກໍຈະຍິນດີຮັບ ຄວາມ

ເສຍໃຈ ມາກມາຍເທົ່າທີ່ເຈົ້າ ຈະຮັບໄດ້ຍິ່ງກວ່າ
ຄວາມປິຕິ ທີ່ເຈົ້າມີຢູ່ ບັດນີ້ແລະເຈົ້າຈະເຫັນວ່າຕົວ
ຄວາມຕາຍນັ້ນເອງ ຈະດີກວ່າຊີວິດທີ່ເຈົ້າມີຢູ່ເວ
ລານີ້.

21. ດູກ່ອນຮູບແຫ່ງທຸລີ :

ເຮົາປາດຖະໜາ ທີ່ຈະສົນທະນາກັບເຈົ້າແຕ່ວ່າບໍ່ມີ
ຄວາມໄວ້ວາງໃຈໃນເຮົາພຣະອົງ ແລະ ຄວາມຫວັງ
ຂອງເຈົ້າຈຶ່ງຈະໄດ້ໂຄ່ນລົ້ມ ໄປດັ່ງຕົ້ນໄມ້ທີ່ຖືກໂຄ່ນ
ຕະຫຼອດເວລາ ທີ່ເຮົາພຣະອົງ ໄດ້ເຂົ້າໄປໃກ້ເຈົ້າ
ເຈົ້າກໍທຳຕົວໄກ ໄປຈາກເຮົາພຣະອົງ ເຮົາພຣະອົງ
ເລືອກຄວາມໄພເຣາະ ອັນບໍ່ຮູ້ສິ້ນສຸດໃຫ້ແກ່ເຈົ້າແຕ່
ວ່າ ເຈົ້າເລືອກຄວາມອັບປະໂຫຍດ ຢ່າງບໍ່ມີຂອບ
ເຂດເປັນຂອງເຈົ້າເອງ ເວລາຍັງມີຢູ່ ຈົ່ງກັບມາ
ເຖີດ ແລະ ຢ່າໄດ້ຖິ້ມໂອກາດເສຍ.

22. ດູກ່ອນບຸດແຫ່ງຄວາມປາດຖະໜາ :

ຜູ້ດີ່ງແກ່ຮຽນ ແລະ ຜູ້ສະຫຼາດໄດ້ພະຍາຍາມຢູ່ ນັບ
ເປັນປີແລ້ວປີອີກ ແຕ່ກໍບໍ່ສາມາດໄປປະກົດຢູ່ເບື້ອງ
ໜ້າຂອງພຣະຜູ້ເປັນເຈົ້າໄດ້ເຂົາເຫຼົ່ານີ້ໃຊ້ຊີວິດຂອງ

ເຂົາ ເພື່ອສະແດງຫາ ພຣະອົງ ແຕ່ວ່າ ບໍ່ອາດໄປ ເຫັນຄວາມງາມຂອງໃບໜ້າຂອງພຣະອົງ ເຈົ້າເອງ ໂດຍບໍ່ຕ້ອງ ພະຍາຍາມອັນໃດ ກໍ່ໄດ້ບັນລຸຈຸດໝາຍ ໂດຍບໍ່ຕ້ອງຄົ້ນຄ້ວາ ເຈົ້າກໍ່ໄດ້ປະສົບສິ່ງຊຶ່ງເຈົ້າປະສົງແຕ່ເດີມຢ່າງນັ້ນ ເຈົ້າກໍ່ຍັງຄົງຕຸ້ມຕົວເອງ ໄວ້ດ້ວຍມ່ານຂອງອັດຕາ ສາຍຕາຂອງເຈົ້າ ຈຶ່ງບໍ່ໄດ້ເຫັນຄວາມງາມຂອງຜູ້ເປັນທີ່ຮັກໄດ້ ແລະ ມືຂອງເຈົ້າຈຶ່ງບໍ່ອາດຈະສຳຜັດ ອາພອນຂອງພຣະອົງໄດ້ ເຈົ້າມີຕາຈຶ່ງໄດ້ເບິ່ງ ແລະ ຈຶ່ງໄດ້ຄົ້ນຫາເດີດ.

23. *ດູກ່ອນຜູ້ທີ່ອາໃສຢູ່ໃນນະຄອນແຫ່ງຄວາມຮັກ :* ດວງທຽນ ອັນບໍ່ດັບສູນນັ້ນ ໄດ້ຖືກ ແຮງລົມ ຂອງຄວາມຕາຍ ພັດເປົ່າຢູ່ ແລະ ຄວາມງາມ ຂອງຜູ້ມາຈາກສະຫວັນ ຕ້ອງຖືກປົດບັງໄວ້ດ້ວຍຄວາມມືດມົນຂອງທຸລີຜູ້ເປັນຫົວໜ້າ ຂອງຈັກລະພັດແຫ່ງຄວາມຮັກຕ້ອງຖືກປະຊາຊົນທີ່ໂຫດຮ້າຍຍ່າຍີ ແລະ ນົກພິລາບແຫ່ງຄວາມທົງສີ ຕ້ອງຢູ່ພາຍໃຕ້ ກົງເລັບຂອງນົກຮຸກ ບັນດາຜູ້ອາໃສຢູ່ພາຍໃຕ້ປັນຍາ ແຫ່ງຄວາມຮຸ່ງເຮືອງ ແລະ ບັນດາຜູ້ຢູ່ບົນສວງສະຫວັນພິລາບ

ແລະ ຮ້ອງໃຫ້ແຕ່ສ່ວນເຈົ້ານັ້ນຍັງຄົງຢູ່ໃນຄວາມຫຼົງລືມແລະຄິດວ່າເຈົ້າເອງເປັນເພື່ອນທີ່ແທ້ຈິງຄວາມຄິດຂອງເຈົ້າຊ່າງເຫຼວໄຫຼດ້ວຍເຫດອັນໃດເຊັ່ນນີ້.

24. *ດູກ່ອນເຈົ້າຜູ້ມີຄວາມໂງ່ ແຕ່ໄດ້ເຊື່ອວ່າ ເປັນຜູ້ສະຫຼາດ:*

ເປັນຫຍັງ ເຈົ້າຈຶ່ງສວມຢູ່ໃນຮ່າງ ຂອງຜູ້ຮັກສາສັດໃນເມື່ອພາຍໃນນັ້ນເຈົ້າໄດ້ກາຍເປັນໝາປ່າໄປແລ້ວພ້ອມກັບຄວາມຕັ້ງໃຈທີ່ຈະທຳຮ້າຍຝູງສັດຂອງເຮົາພຣະອົງ ເຈົ້ານັ້ນເປັນສະເໝືອນດວງດາວຊຶ່ງຂຶ້ນໃນເຊົ້າຮຸ່ງ ແມ້ຈະມີແສງປະກາຍ ແຕ່ກໍບໍ່ໃຫ້ຄົນເດີນທາງໃນນະຄອນຂອງເຮົາພຣະອົງຕ້ອງຫຼົງທາງໄປ.

25. *ດູກ່ອນເຈົ້າຊຶ່ງເບິ່ງຄວາມງາມແຕ່ພາຍໃນນັ້ນສົກກະປົກ:*

ເຈົ້ານັ້ນປຽບສະເໝືອນບ້າຊຸ່ມທີ່ມີສີໃສ ພາຍນອກເບິ່ງບໍລິສຸດສະອາດແຕ່ວ່າເມື່ອໄດ້ທົດລອງແລ້ວແມ້ແຕ່ຢອດດຽວຂອງເຈົ້າ ເຮົາພຣະອົງກໍບໍ່ອາດຈະຮັບໄວ້ໄດ້, ເປັນຄວາມຈິງອັນໜຶ່ງລຳແສງຈາກດວງອາທິດຕົກຕ້ອງຫຼຸລີແລະກະຈົກເຊັ່ນດຽວກັນແຕ່ວ່າແສງ

ສະທ້ອນນັ້ນ ຕ່າງກັນປຽບສະເໝືອນດວງດາວແຕກຕ່າງກັບພື້ນດິນ ຄວາມແຕກຕ່າງກັນນັ້ນມີຫຼວງຫຼາຍຢ່າງ.

26. ດູກ່ອນສະຫາຍຂອງເຮົາພຣະອົງໃນຄຳເວົ້າ:
ຈົ່ງຄິດຈັກຄັ້ງເຖິດ ເຈົ້າເຄີຍໄດ້ຍິນຫຼືບໍ່ ເພື່ອນມິດກັບສັດຕູຈະຢູ່ໃນຫົວໃຈດຽວກັນໄດ້ ດັ່ງນັ້ນຈົ່ງກຳຈັດຜູ້ແປກໜ້າໄປ ເພື່ອວ່າພຣະຜູ້ເປັນເພື່ອນຈະໄດ້ຢູ່ໃນບ້ານຂອງພຣະອົງ.

27. ດູກ່ອນບຸດແຫ່ງທຸລີ

ທັງໝົດນັ້ນສະຫວັນເບື້ອງບົນ ແລະ ພິພົບເບື້ອງລ່າງເຮົາພຣະອົງກຳນົດໄວ້ສຳຫຼັບເຈົ້າ ເວັ້ນແຕ່ຫົວໃຈມະນຸດ ຊຶ່ງເຮົາພຣະອົງທຳໄວ້ ເພື່ອເປັນທີ່ຢູ່ແຫ່ງຄວາມງາມ ແລະ ຄວາມຮຸ່ງເຮືອງຂອງເຮົາພຣະອົງນັ້ນໄປໃຫ້ຜູ້ອື່ນເສຍ ແລະເມື່ອໃດທີ່ຜູ້ທີ່ເຮົາພຣະອົງສົ່ງມາຈະສະແຫວງຫາທີ່ພັກຂອງເຂົ້າເຂົາກໍ່ຈະກາຍເປັນຄົນແປກໜ້າທີ່ນັ້ນ ແລະ ຈະກັບຄືນມາຍັງເຮົາພຣະອົງຢ່າງຜູ້ບໍ່ມີທີ່ອາໄສຢູ່ ເຖິງຢ່າງນັ້ນເຮົາ

ພຣະອົງ ກໍ່ຍັງປົດບັງຄວາມຜິດຂອງເຈົ້າໄວ້ ແລະບໍ່ປະລົງຈະໃຫ້ເຈົ້າອາຍ.

28. ດູກ່ອນສາລະແຫ່ງຄວາມປາດຖະໜາ.

ຫຼາຍຕໍ່ຫຼາຍອະຣຸນພຣະອົງ ໄດ້ພາກຈາກແດນຂອງເຮົາພຣະອົງໄປສູ່ທີ່ຂອງເຈົ້າ ແລະ ໄດ້ພົບເຈົ້າຈົມຢູ່ໃນຄວາມລະເລີຍໂດຍວຸ້ນຢູ່ກັບຜູ້ອື່ນຍ້ອນການຈາກໄປຂອງພຣະອົງ ເມື່ອເປັນເຊັ່ນນີ້ເຮົາພຣະອົງ ກໍ່ຕ້ອງກັບມາທັນທີ ທີ່ແດນແຫ່ງຄວາມຮຸ່ງເຮືອງຂອງເຮົາພຣະອົງ ແຕ່ໃນການກັບມາຂອງເຮົາພຣະອົງເຮົາພຣະອົງກໍ່ບໍ່ໄດ້ເອົາຄວາມຮ້າຍຂອງເຈົ້ານັ້ນມາແຈ້ງຕໍ່ຜູ້ຢູ່ພິພົບເບື້ອງໜ້າ.

29. ດູກ່ອນບຸດແຫ່ງຄວາມບໍລິບູນ.

ຈາກສິ່ງຮົກຮ້າງໃນຄວາມວ່າງເປົ່າ ແລະ ດ້ວຍບັນຊາຂອງເຮົາພຣະອົງ ເຮົາພຣະອົງໄດ້ສ້າງເຈົ້າຂຶ້ນມາໃຫ້ປະກົດ ແລະໄດ້ກຳນົດໃຫ້ທຸກປະລະມະນູໃນພິພົບ ແລະ ພາລະໃນທຸກສິ່ງທີ່ໄດ້ບັງເກີດຂຶ້ນນີ້ ເປັນການຝຶກສອນເຈົ້າດັ່ງນັ້ນ, ກ່ອນທີ່ເຈົ້າຈະປະສູດມາ

ຈາກຫ້ອງຂອງນາບດາເຈົາພຣະອົງ ໄດ້ກຳນົດໃຫ້
ມີຕ່ອນນ້ຳນົມສຳຫຼັບລ້ຽງເຈົ້າ ໃຫ້ມີສາຍຕາສຳລັບ
ດູແລເຈົ້າ ໃຫ້ມີຫົວໃຈ ສຳລັບຮັກເຈົ້າດ້ວຍຄວາມ
ເມດຕາຂອງເຈົາພຣະອົງ ແລະພາຍໃຕ້ຮົ່ມເງົາແຫ່ງ
ຄວາມກະລຸນາຂອງເຈົາພຣະອົງເຈົາພຣະອົງໄດ້ທະ
ບຸທະໜອມເຈົ້າຂຶ້ນມາ ແລະ ໄດ້ລະວັງຮັກສາເຈົ້າ
ດ້ວຍສາລະແຫ່ງຄວາມກະລຸນາ ແລະ ຄວາມຮັກໄດ່
ທີ່ເຈົາພຣະອົງທຳທັງໝົດນ້ ກໍດ້ວຍວ່າເຈົ້າຈະໄດ້ບັນ
ລຸເຖິງອານາຈັກອັນບໍ່ຮູ້ສິ້ນສຸດ ຂອງເຈົາພຣະອົງ
ແລະ ຈະໄດ້ຄູ່ຄວນ ແກ່ພູມສະຖານ ຂອງເຈົາພຣະ
ອົງ ຊຶ່ງບໍ່ອາດຈະເບິ່ງເຫັນໄດ້ ແຕ່ແລ້ວເຈົ້າຍັງ
ຄົງບໍ່ສົນໃຈ ແລະ ເມື່ອເຕີບໂຕແລ້ວເຈົ້າກໍລະເລີຍ
ຄວາມບໍລິບູນທັງໝົດຂອງເຈົາພຣະອົງ ແລະ ເອົາ
ຕົວເຈົ້າໄປຫຍຸ້ງ ຢູ່ກັບຄວາມນຶກຄິດທີ່ບໍ່ເປັນສາລະ
ຂອງເຈົ້າຈົນໃນທີ່ສຸດ ເຈົ້າກໍລືມທຸກສິ່ງທຸກຢ່າງໄປ
ແລະ ກໍຫັນໜ້າໜີໄປຈາກປະຕູທີ່ພຣະຜູ້ເປັນມິດແທ້
ຂອງເຈົ້າໄດ້ເປີດໄວ້ໃຫ້ ແລະ ໄດ້ກັບໄປອາໄສຢູ່ຖິ່ນ
ທີ່ຂອງສັດຕູຂອງເຈົາພຣະອົງ.

30. *ດູກ່ອນຜູ້ທຳຕົວເປັນທາດຂອງໂລກ:*

ຫຼາຍຕໍ່ຫຼາຍເຊົ້າເປັນປະຈຳລືມແຫ່ງຄວາມເມດຕາ ຂອງເຮົາພຣະອົງ ໄດ້ພັດມາຍັງເຈົ້າ ແລະ ໄດ້ພົບ ເຈົ້າຫຼັບຢູ່ຢ່າງບໍ່ເອົາໃຈໃສ່ ດ້ວຍຄວາມເສຍໃຈລືມ ແຫ່ງຄວາມເມດຕານັ້ນກໍຕ້ອງກັບໄປທີ່ເດີມ.

31. *ດູກ່ອນບຸດແຫ່ງພື້ນດິນ*

ຫາກເຈົ້າປະສົງເຮົາພຣະອົງກໍ່ຈົ່ງຢ່າ ສະແຫວງຫາ ຜູ້ອື່ນ ນອກຈາກເຮົາພຣະອົງ ຫາກເຈົ້າປະສົງຈະ ເພີ່ມໃນຄວາມງາມ ຂອງເຮົາພຣະອົງ ກໍ່ຈົ່ງປິດຕາ ຂອງເຈົ້າເສຍຈາກໂລກ ແລະ ຈາກທັງໝົດທີ່ຢູ່ໃນ ໂລກ ເພາະເຫດວ່າໃຈຂອງເຮົາພຣະອົງ ແລະ ໃຈ ຂອງຜູ້ອື່ນ ນອກໄປຈາກເຮົາພຣະອົງເປັນສະເໝືອນ ໄຟກັບນ້ຳ ທີ່ບໍ່ອາດຈະຢູ່ຮ່ວມກັບໃນຕົວໃຈອັນດຽວ ໄດ້.

32. *ດູກອນຜູ້ແປກໜ້າທີ່ໄດ້ມາເປັນເພື່ອນ:*

ແສງສະຫວ່າງ ຈາກຕົວໃຈຂອງເຈົ້ານັ້ນ ເກີດຂຶ້ນ ຈາກມືແຫ່ງອຳນາດຂອງເຮົາພຣະອົງ ຢ່າໄດ້ທຳໃຫ້

ມັນມືດໄປເສຍດ້ວຍຕົວຂອງເຈົ້າເອງ ແລະ ດ້ວຍ
ຄວາມປາດຖະໜາຂອງເຈົ້າ ສິ່ງທີ່ຈະຮັກສາຄວາມ
ໃສ້ຂອງເຈົ້າທັງປວງໄດ້ນັ້ນ ຄືການລະນຶກເຖິງເຮົາ
ພຣະອົງຢ່າລືມຂັ້ນເສຍ ຈົ່ງເອົາຄວາມຮັກຂອງເຈົ້າ
ຜ່ານພຣະອົງ ເປັນທີ່ຮັກໄປຢ່າງວ່ອງໄວ ສະດຸດພ້າ
ແນບແລ້ວເຈົ້າກໍເອົາຫົວໃຈໄປຝາກໃຫ້ກັບເພັດນານ
ໃຫ້ກັບຄວາມນຶກຄິດທີ່ເພ້ຝັນແລ້ວ ຮ້ອງມັນວ່າສັດ
ຈະເຈົ້າຫັບສາຍຕາໄປສູ່ໝານແຫຼມແລ້ວ ຮ້ອງມັນ
ວ່າດອກໄມ້ເຈົ້າບໍ່ໄດ້ຫາຍໃຈດ້ວຍລົມຫາຍໃຈ ແຫ່ງ
ຄວາມບໍລິສຸດແລະຈາກສະໝານ ແຫ່ງຫົວໃຈຂອງ
ເຈົ້າບັ້ນກະແສລົມແຫ່ງ ຄວາມຫລຸດພົ້ນ ບໍ່ໄດ້ພັດ
ຜ່ານໄປເລີຍ ພຣະອົງເປັນຜູ້ທີ່ຮັກໃຫ້ຄໍາແນະນໍາໄວ້
ຢ່າງໃດ ເຈົ້າກໍລືມໄປເສຍບໍ່ຍອມປະຮ່ອງຮອຍໄວ້ໃນ
ຫົວໃຈ ແລະ ເຈົ້າເຄື່ອນໄຫວ ແລະ ດໍາລົງຕົວຂອງ
ເຈົ້າຢູ່ໃນທົ່ງແຫ່ງຄວາມປາດຖະໜາ ແລະ ໂມຫະ
ເໝືອນກັບບັນດາສັດທີ່ອາໄສຢູ່ໃນທົ່ງຫຍ້າ.

33. ດູກ່ອນພີ່ນ້ອງຂອງເຮົາພຣະອົງ:

ຈົ່ງໄດ້ຟັງນໍ້າຄໍາອັນຊື່ນ ຈາກລີ້ນຂອງເຮົາພຣະອົງ

ແລະ ຈຶ່ງດື່ມສາຍທານແຫ່ງຄວາມບໍລິສຸດ ອັນລຶກລັບ
ຈາກຄຳສອນຂອງເຮົາພຣະອົງ ໃນຫົວໃຈອັນບໍລິສຸດ
ຂອງເຈົ້ານັ້ນ ຈຶ່ງເພາະພືນແຫ່ງຄວາມສະຫຼາດທີ່ໄປ
ຈາກເຮົາພຣະອົງ ແລະ ຈຶ່ງຖະໜອມມັນໄວ້ດ້ວຍສັດ
ທາອັນໝັ້ນຄົງເພື່ອວ່າຄວາມຮູ້ ແລະ ປັນຍາຂອງ
ເຮົາພຣະອົງ ອັນເປັນປະໜຶ່ງດອກໄມ້ຫອມ ຈະໄດ້
ງອກງາມສົດຊື່ນ ແລະ ຊຸ່ມຢູ່ໃນບໍລິເວນແຫ່ງຫົວໃຈ
ຂອງເຈົ້ານັ້ນ.

34. *ດູກ່ອນຜູ້ອາໄສຢູ່ໃນນະຄອນຂອງເຮົາພຣະອົງ:*
ດ້ວຍມືແຫ່ງຄວາມຮັກ ແລະ ຄວາມອາລີເຮົາພຣະ
ອົງ ໄດ້ປູກຝັງຄວາມຮັກ ແລະ ໄມຕີໄວ້ກັບເຈົ້າປຽບ
ສະເໝືອນໄດ້ປູກຕົ້ນໄມ້ແຫ່ງຄວາມຮັກ ແລະ ໄມຕີນີ້
ປຽບສະເໝືອນ ຊາວສວນທີ່ຮັກຕົ້ນໄມ້ອ່ອນ ທີ່ເຂົາ
ປູກໄວ້ ບັດນີ້ເວລາໄດ້ມາເຖິງແລ້ວ ທີ່ຈະເກີດດອກ
ອອກຜົນ ຈຶ່ງພະຍາຍາມເຖີດເພື່ອຈະປົກປັກຮັກສາ
ໄວ້ ແລະ ຢ່າໃຫ້ໄຟແຫ່ງຄວາມປາດຖະໜາແລະໂມ
ຫະໄປທຳລາຍມັນເສຍ ຂອງພຣະອົງໄດ້ຜົດຜ່ານມາ
ແລ້ວແຕ່ເຈົ້າທັງປວງກໍຍັງບໍ່ຮັບເອົາໄວ້ແລະຍັງຍອມ

ຊັດຄືນຢູ່ ໜ້າສິງສານສຳລັບເຈົ້າ ແລະ ດິນທີ່ເດີນ
ໃນທາງຂອງເຈົ້າ ແລະ ຕິດຕາມຮອຍຕີນຂອງເຈົ້າ
ໄປ.

35. ດູກ່ອນເພື່ອນຂອງເຮົາພຣະອົງ:

ຈົ່ງດັບແສງຕາກຽງແຫ່ງຄວາມຜິດຫວັງນັ້ນເສຍແລະ
ໃນຫົວໃຈຈົ່ງຈຸດດັບອັນບໍ່ຮູ້ສິ້ນສຸດ ເພື່ອນຳທາງໄປ
ສູ່ເບື້ອງບົນເພາະວ່າ ອີກບໍ່ນານໃນທີ່ສະຖານເບື້ອງ
ບົນນັ້ນຜູ້ທີ່ມີໜ້າທີ່ວິເຄາະ ມະນຸດຊາດຈະບໍ່ຍອມຮັບ
ສິ່ງໃດນອກຈາກຄຸນນະທຳບໍລິສຸດ ແລະ ການກະທຳ
ທີ່ເປັນແຕ່ບຸນເທົ່ານັ້ນ.

36. ດູກ່ອນບຸດແຫ່ງທຸລີ:

ຜູ້ສະຫຼາດນັ້ນເຂົາຈະບໍ່ເວົ້າອອກມາ ເມື່ອຈະມີຜູ້ຟັງ
ເຊັ່ນດຽວກັບ ຜູ້ມີນ້ຳອອກໄປ ຈົນກ່ວາເຂົາຈະເຫັນ
ຜູ້ຕ້ອງການ ແລະ ເຊັ່ນດຽວກັບ ຜູ້ມີຄວາມຮັກ ທີ່ຈະ
ບໍ່ຮ້ອງຮຽກ ໄປຈາກຫ້ອງຫົວໃຈ ຂອງເຂົາຈົນກ່ວາ
ເຂົາຈະໄດ້ເຫັນຄວາມງາມ ຂອງທີ່ເຂົາຮັກ ດັ່ງນັ້ນ
ຈົ່ງຫວ່ານພືດແຫ່ງຄວາມສະຫຼາດ ແລະ ຄວາມຮູ້ລົງ

ບິນພົ້ນຫົວໃຈອັນບໍລິສຸດ ແລະ ຈົ່ງເກັບຮັກສາໄວ້ ທີ່
ນັ້ນ ຈົນກ່ວາບັນຍາຫົບເປັນສະເໝືອນດອກໄມ້ຫອມ
ຈະງອກຂົ້ນຈາກຫົວໃຈ ແລະ ບໍ່ແມ່ນຈາກລັກ ແລະ
ຕົມ.

37. ດູກ່ອນຄົນໃຊ້ຂອງເຮົາພຣະອົງ :

ເຮົາພຣະອົງເປັນສົມບັດຂອງເຈົ້າແລະ ຈົ່ງຖະໜອມ
ມັນໄວ້ປະໜຶ່ງເປັນສາຍຕາ ແລະ ຊີວິດຂອງເຈົ້າເອງ

38. ດູກ່ອນບຸດແຫ່ງທ່ານະ :

ຈົ່ງອອກມາເສຍ ຈາກຖົງຂອງເຈົ້າ ແລ້ວບິນໄປໃນ
ຟ້າແຫ່ງບຸນເໝືອນຫົງທີ່ເລາະໄປ ດ້ວຍໃຈຮັກຈົ່ງ
ປະຕິເສດຕົວຂອງເຈົ້າເອງ ດ້ວຍນ້ຳໃຈ ແຫ່ງ ອາລີ
ແລະ ຈົ່ງເຂົ້າໄປຢູ່ເສຍໃນພິພົບ ທີ່ໄປສູງຂົ້ນ.

39. ດູກ່ອນຜູ້ກຸກລາກຫຼີ :

ຢ່າໄດ້ພໍໃຈໄປກັບຄວາມສະບາຍໄປໃນວັນງໜຶ່ງທີ່ຈະ
ທຳໃຫ້ເຈົ້າໄປບໍ່ເຖິງທີ່ພັກອັນບໍ່ຮູ້ສົ້ນສຸດ ຈົ່ງຢ່າເອົາ
ສວນ ແຫ່ງ ຄວາມບິຕິ ອັນເປັນອະນັນຕະການ ໄປ
ແລກກັບກ້ອນດິນຂອງໂລກນີ້ ຈົ່ງອອກໄປເສຍຈາກ

ຄຸກ ທີ່ຂັງຕົວເຈົ້າຢູ່ແລ້ວ ໄປສູ່ທົ່ງກວ້າງ ອັນອໍາໄພ ເບື້ອງບົນພຸ້ນ ແລະ ຈາກກົງແຫ່ງຄວາມຕາຍຈົ່ງບິນ ໄປສູ່ສະຫວັນອັນມະຫາສະຖານທີ່ບໍ່ໄດ້.

40. ດູກ່ອນຜູ້ຮັບໃຊ້ເຮົາພຣະອົງ :

ຂອງໂລກນີ້ ໄປເສຍແລ້ວ ໃຫ້ວິນຍານ ຫຼຸດພົ້ນຈາກ ການຈ່ອງຈໍາ ຂອງອັດຕາ ມີໂອກາດດີແລ້ວ ຈົ່ງຢ່າ ໃຫ້ໂອກາດນີ້ໄດ້ໜີໄປ.

41. ດູກ່ອນຜູ້ເປັນບຸດແຫ່ງນາງຮັບໃຊ້ຂອງເຮົາພຣະອົງ:

ຫາກວ່າເຈົ້ານອງເຫັນອານຸພາບອັນເປັນມິດໄດ້ເຈົ້າ ຈະຕ້ອງພະຍາຍາມ ຈາກໂລກອັນເປັນອະນິຈັງນີ້ແຕ່ ວ່າການຈະປິດບັງເຈົ້າ ຈາກສິ່ງທໍາອິດແລະ ໃຫ້ເຈົ້າ ເຫັນຄວາມຈິງ ໃນສິ່ງທັງເປັນຄວາມລັບ ຊຶ່ງມີແຕ່ ຜູ້ມີຄວາມບໍລິສຸດໃນຫົວໃຈເທົ່ານັ້ນຈະເຂົ້າໃຈໄດ້.

42. ດູກ່ອນຜູ້ຮັບໃຊ້ຂອງເຮົາພຣະອົງ :

ຈົ່ງກໍາຈັດຄວາມຮ້າຍໃນໃຈ ຂອງເຈົ້າໄປເສຍ ແລະ ເຂົ້າໄປຢູ່ໃນວິຫານແຫ່ງບຸນະ ດ້ວຍຫົວໃຈ ທີ່ສະອາດ ໝົດຄວາມມີໂທດ.

43 ດູກ່ອນເພື່ອນຂອງເຮົາພຣະອົງ :

ຈົ່ງເດີນທາງໄປ ໃນພຣະຜູ້ເປັນເພື່ອນຂອງເຈົ້າ ໄດ້ກໍາບົດໃຫ້ ແລະ ຈົ່ງຮູ້ເຖີງວ່າຄວາມປະສົງຂອງພຣະອົງນັ້ນກໍ່ດີ ເພື່ອຄວາມສຸກ ຂອງພວກເຈົ້າ ຫາກບໍ່ແມ່ນເພື່ອຄວາມປະສົງຂອງເພື່ອນແລ້ວຜູ້ໃດ?

44. ດູກ່ອນເພື່ອນແຫ່ງບັນລັງຂອງເຮົາພຣະອົງ:

ຢ່າຟັງສິ່ງຊົ່ວ ແລະ ຢ່າເບິ່ງສິ່ງຊົ່ວ ຢ່າປົດຕົວຂອງເຈົ້າໃຫ້ຕ່າຫັງບໍ່ຕ້ອງຖອນໃຈແລະ ຮ່າໃຫ້ ຢ່າຢ້ານສິ່ງຊົ່ວ ເພື່ອວ່າເຈົ້າ ຈະບໍ່ຕ້ອງໄດ້ຟັງມັນ ແລະ ຢ່າໄດ້ຂະຫຍາຍຄວາມຜິດຂອງຜູ້ອື່ນ ເພື່ອວ່າຄວາມຜິດຂອງເຈົ້ານັ້ນເອງ ຈະໄດ້ບໍ່ໃຫຍ່ຂຶ້ນ ແລະ ຢ່າໄດ້ປາດຖະໜາ ໃຫ້ຜູ້ອື່ນຕົກຕ່ໍາ ເພື່ອວ່າຄວາມຕົກຕ່ໍາຂອງເຈົ້າເອງຈະໄດ້ບໍ່ຖືກເປີດເຜີຍ ວັນເວລາແຫ່ງຊີວິດຂອງເຈົ້ານັ້ນຈະຢູ່ໄດ້ຊົ່ວແລ່ນ ດັ່ງນັ້ນຈົ່ງດໍາເນີນຊີວິດດ້ວຍນ້ໍາໃຈທີ່ບໍລິສຸດດ້ວຍຫົວໃຈທີ່ສະອາດດ້ວຍຄວາມຄິດທີ່ບໍ່ເປັນໂທດ ແລະ ດ້ວຍທໍາມະຊາດປາສະຈາກບາບ ເພື່ອວ່າເຈົ້າຈະໄດ້ອອກໄປຈາກ

ຮ່າງທີ່ຈະຕ້ອງຕາຍຢ່າງອິດສະຫຼະແລະດ້ວຍຄວາມ ພໍໃຈ ແລະຈະໄດ້ກັບໄປສູ່ແດນສະຫວັນອັນລີ້ລັບແລະ ໄປຢູ່ໃນອານາຈັກອັນບໍ່ຮູ້ສິ້ນສຸດ.

45. ອະນິຈາ ອະນິຈາຜູ້ຮັກໃນຄວາມປາດຖະໜາຂອງ ໂລກທັງປວງ:

ຢ່າໄດ້ປະຖິ້ມອານາຈັກອັນບໍ່ຮູ້ສິ້ນ ເພື່ອໄປຫາສິ່ງຊຶ່ງ ຈະຕ້ອງເຊື່ອມສູນ ແລະຢ່າໄດ້ສະລັດເສີຍ ຊຶ່ງອະນຸ ພາບຈາກເບື້ອງບົນເພື່ອຄວາມປາດຖະໜາ ໃນໂລກ ນີ້ທີ່ເປັນລຳທານແຫ່ງຊີວິດ ອັນບໍ່ເຫືອດແຫ້ງຊຶ່ງໄຫຼ ມາຈາກຕົ້ນນ້ຳແຫ່ງຄວາມເມດຕາ ເປັນສິ່ງປະເສີດ ແທ້ແກ່ຜູ້ທີ່ໄດ້ດື່ມ.

46. ດູກ່ອນພີ່ນ້ອງຮ່ວມຢູ່ໃນທາງ:

ດ້ວຍເຫດໃດເຈົ້າຈຶ່ງລະເລີຍ ການກ່າວເຖິງພຣະຜູ້ ເປັນທີ່ຮັກແລະເຫດໃດ ເຈົ້າຈຶ່ງທຳຕົວໃຫ້ຫ່າງໄປ ຈາກພຣະອົງພາຍໃນສິ່ງອັນຫາທີ່ປຽບບໍ່ໄດ້ນັ້ນ ມີສາ ລະແຫ່ງຄວາມງາມ ປະດິດສ້າງຢູ່ບົນບັນລັງ ແຫ່ງ ຄວາມຮຸ່ງເຮືອງ ແຕ່ວ່າເຈົ້າກັບໄປສາລະວົນ ຢູ່ກັບ

ການໂຕ້ແຍ້ງອັນບໍ່ເປັນປະໂຫຍດ ໃຊ້ຄ່າກິ່ນຫອມ
ແຫ່ງບຸບກຳລັງພັດຢູ່ແລະຄວາມກະລຸນາ ໃດຈະເຂົ້າ
ໄປໃນບ້ານຂອງເຂົາໄດ້ ຫຼືຈະໄປແຕະຕ້ອງຊຸບສົບ
ຫຼື ໄດ້ຂວາງນ້ຳໃຈຂອງເຂົາໄດ້ ຈົ່ງຄຶດເຖິງຂໍ້ເຖິດ
ເຈົ້າຜູ້ມີສາຍຕາ.

47. *ດູກ່ອນບຸດແຫ່ງຄວາມປາດຖະໜາ:*

ຈົ່ງເປື້ອງອາພອນແຫ່ງຄວາມລຳພັງໃຈຂອງເຈົ້ານັ້ນ
ອອກເສຍແລະຄວາມໂສມນາບັດຊຶ່ງເຈົ້າປະດັບຕົວ
ຢູ່ນັ້ນຈົ່ງປົດອອກໄປເສຍ.

48. *ດູກ່ອນພີ່ນ້ອງ:*

ຈົ່ງໄດ້ມີໄມຕີຕໍ່ກັນ ແລະ ຢ່າໄດ້ເອົາຄວາມຮັກໄປຜູກ
ໄວ້ກັບສິ່ງເປື້ອງລຸ່ມ ຄວາມຮຸ່ງເຮືອງຂອງເຈົ້ານັ້ນ
ຢ່າຄິດວ່າເປັນສິ່ງໜ້າພູມໃຈ ແລະ ເຈົ້າຢ່າໄດ້ລະ
ອາຍໃນຄວາມຕົກຕ່ຳ ຄວາມງາມຂອງເຈົ້າພຣະອົງ
ເປັນພະຍານໄດ້ວ່າ ເຈົ້າພຣະອົງໄດ້ສ້າງທຸກສິ່ງທຸກ
ຢ່າງຈາກທຸລີ ແລະ ທຸກສິ່ງທຸກຢ່າງນັ້ນເຈົ້າພຣະອົງ
ຈະສົ່ງຄືນໄປໃຫ້ເປັນທຸລີອີກຄັ້ງນຶ່ງ.

49. ດູກ່ອນບຸດແຫ່ງທຸລີ:

ຈົ່ງບອກຄົນມີຊັບສິນໃຫ້ຮູ້ວ່າ ຜູ້ຍາກຈົນນັ້ນ ທອດຖອນຫາຍໃຈ ໃນເວລານອນບອກເຂົາເຊັ່ນນີ້ ເພື່ອໃຫ້ຮູ້ວ່າ ເຂົາຈະບໍ່ໄດ້ລືມຕົວ ແລະ ເດີນໄປສູ່ຄວາມຫາຍະນະ ແລະ ຕ້ອງສູນເສຍຄວາມຮັ່ງມີອັນແທ້ຈິງ ແລະ ຄວາມເພື່ອແຜ່ເປັນຄຸນສົມບັດຂອງເຈົ້າພຣະອົງ ຜູ້ໃດທີ່ປະດັບຕົວໄວ້ດ້ວຍຄຸນສົມບັດ ຂອງເຈົ້າຜູ້ນັ້ນ ຈະປະສົບຄວາມດີທ່ຽງແທ້ແນ່ນອນ.

50. ດູກ່ອນຜູ້ປ່ອຍຄວາມມົວເມົາ:

ຈົ່ງສະຫຼະຄວາມໂລບທັງປວງເສຍ ແລະ ສະແຫວງຫາຄວາມສັນໂດດ ຜູ້ທີ່ໂລບນັ້ນ ຈະຕ້ອງຍາກຈົນສ່ວນຜູ້ທີ່ ສັນໂດດ ພັດທະນາຈິດໃຈ ຈະເປັນທີ່ຮັກແລະຈະໄດ້ຮັບການສັນລະເສີນຍ້ອງຍໍ.

51. ດູກ່ອນຜູ້ເປັນບຸດແຫ່ງນາງຮັບໃຊ້ຂອງເຮົາພຣະອົງ:

ຢ່າໄດ້ວິຕົກໃນຄວາມຍາກຈົນ ແລະ ຢ່າໄດ້ພູມໃຈໃນຄວາມຮັ່ງມີ ເພາະວ່າຄວາມຍາກຈົນນັ້ນຈະຕາມດ້ວຍຄວາມຮັ່ງມີ ແລະ ຄວາມຮັ່ງມີນັ້ນ ຈະນຳມາ

ດ້ວຍຄວາມຍາກຈົນ ແຕ່ວ່າຄວາມຍາກຈົນໃນທຸກສິ່ງທຸກຢ່າງ ນອກຈາກໃນພຣະເປັນເຈົ້ານັ້ນ ເປັນຂອງກໍາເນີດອັນປະເສີດ ຈົ່ງຢ່າໄດ້ເຫັນວ່າ ຄວາມຍາກຈົນເຊັ່ນນີ້ມີຄ່ານ້ອຍ ເພາະວ່າໃນທີ່ສຸດຄວາມຍາກຈົນເຊັ່ນນີ້ ຈະທໍາໃຫ້ເຈົ້າຮັ່ງມີ ຢູ່ໃນພຣະເປັນເຈົ້າແລ້ວ ໃນເວລານັ້ນ ເຈົ້າຈະໄດ້ຮູ້ຄວາມໝາຍຂອງຄໍາວ່າ "ແທ້ທີ່ຈິງນັ້ນ ເຈົ້າເປັນຄົນຍາກຈົນ" ແລະ ຄໍາສອນຂອງພຣະຄໍາພີທີ່ວ່າ: "ພຣະຜູ້ເປັນເຈົ້າມີທຸກສິ່ງທຸກຢ່າງ" ນັ້ນຈະຊາບເຂົ້າໄປໃນຫົວໃຈ ຂອງຜູ້ທີ່ຮັກພຣະເປັນເຈົ້າ ປຽບເໝືອນໜຶ່ງແສງຂອງຍາມເຊົ້າ ທີ່ສາດແສງ ມາຍັງພິພົບແລ້ວ ໃນເວລານັ້ນເຈົ້າຈະໝັ້ນຄົງຢູ່ໃນບັນລັງແຫ່ງຄວາມຮັ່ງມີໂດຍແທ້.

52. ດູກ່ອນທາຣົກແຫ່ງຄວາມສະເລີຍ ແລະ ຄວາມປາດຖະໜາ:

ໃນຫົວໃຈຂອງເຈົ້າ ຊຶ່ງປຽບເໝືອນໜຶ່ງບ້ານ ຂອງເຈົ້າພຣະອົງ ເຈົ້າໄດ້ຍອມໃຫ້ສັດຕູຂອງເຈົ້າພຣະອົງ

ເຂົ້າໄປຢູ່ ແລະ ເຈົ້າຂັບໄລ່ສາສະດາຜູ້ເປັນເພື່ອນຂອງເຮົາພຣະອົງໄປທີ່ເປັນເຊັ່ນນີ້ ເພາະເຫດວ່າເຈົ້າຍົກຍ້ອງໃນຄວາມຮັກຂອງຜູ້ອື່ນ ນອກໄປຈາກເຮົາພຣະອົງ ຈຶ່ງສົນໃຈໃນຄຳຂອງເພື່ອນຂອງເຮົາພຣະອົງ ແລະ ຈຶ່ງຫັນໄປຍັງພົບຂອງເຂົາບັນດາເພື່ອນບົນພື້ນໂລກນັ້ນ ຈະສະແຫວງປະໂຫຍດຂອງເຂົາເອງແລະຈະເບິ່ງເໝືອນວ່າຮັກຊຶ່ງກັນ ແລະກັນ ສ່ວນ ສາສະດາ ຜູ້ເປັນເພື່ອນອັນແທ້ຈິງ ຂອງເຈົ້ານັ້ນ ໄດ້ຮັກເຈົ້າ ແລະຈະຮັກເຈົ້າຕໍ່ໄປເພື່ອປະໂຫຍດຂອງເຈົ້າ ແທ້ທີ່ຈິງແລ້ວ ເຂົາຕ້ອງຮັບທຸກທໍລະມານຢ່າງຫາທີ່ປຽບບໍ່ໄດ້ ເພາະເຂົາຕ້ອງການຈະນຳທາງໃຫ້ແກ່ເຈົ້າ ຈຶ່ງຢ່າໄດ້ລະຖິ້ມເພື່ອນເຊັ່ນນີ້ເສຍ ກົງກັນຂ້າມ ເຈົ້າຈຶ່ງຮີບຟ້າວໄປຫາເຂົາ ນີ້ເປັນຄຳສັດຈະ ແລະຄຳອັນສຸດຈະລິດທີ່ສູງສຸດ ຊຶ່ງເຮົາພຣະອົງຈະສົ່ງໃຫ້ເຈົ້າໄດ້ຈາກຟາກຟ້າຂອງເຮົາພຣະອົງຈຶ່ງເປີດຫູຂອງເຈົ້າ ເພື່ອເຈົ້າຈະໄດ້ຍິນ ຄຳຂອງພຣະເປັນເຈົ້າຜູ້ຈະຊ່ວຍເຈົ້າໃນຍາມອັນຕະລາຍ ແລະຜູ້ບໍ່ຕ້ອງອາໃສຜູ້ໃດ.

53. ດູກ່ອນມະນຸດຜູ້ພໍໃຈໃນຄວາມຮັ່ງມີ ທີ່ຈະສູນສິ້ນໄປ ຈົ່ງຮູ້ໄວ້ເຖີດວ່າ ຄວາມຮັ່ງມີນັ້ນ ເປັນເຄື່ອງກີດຂວາງອັນຮ້າຍແຮງລະຫວ່າງ ຜູ້ສະແຫວງ ແລະ ຄວາມປາຖະໜາ ຂອງເຂົາ ແລະ ລະຫວ່າງ ຜູ້ມີຄວາມຮັກ ແລະຜູ້ທີ່ເຂົາຮັກມີຈຳນວນນ້ອຍທີ່ສຸດໃນບັນດາ ຜູ້ຮັ່ງມີ ທີ່ຈະໄດ້ໄປເຖິງແດນຂອງພຣະອົງທີ ທີ່ຈະໄດ້ເຂົ້າໄປສູ່ນະຄອນແຫ່ງຄວາມສຸກ ແລະ ຄວາມປີຕິ ດັ່ງນັ້ນ ຈະເປັນການດີແກ່ເຂົາຜູ້ມີຄວາມຮັ່ງມີ ຫາກເຂົາຈະບໍ່ຖືກກີດຂວາງ ດ້ວຍຄວາມຮັ່ງມີຂອງເຂົາ ຈາກອານາຈັກ ອັນເປັນ ອະນັນຕະການ ແລະ ຈະບໍ່ຖືກພາກອອກຈາກດິນແດນທີ່ບໍ່ມີຄວາມສູນສິ້ນນານອັນສູງສຸດ ຈົ່ງເປັນພະຍານເຖີດຜູ້ຮັ່ງມີເຊັ່ນວ່າ: ນັ້ນຈະສ່ອງປະກາຍ ແຫ່ງ ຄວາມດີຂອງເຂົາໃຫ້ໄດ້ເຫັນທົ່ວໄປບົນສະຫວັນ ເຊັ່ນດຽວກັບດວງຕາວັນ ທີ່ຈະສ່ອງແສງໃຫ້ແກ່ມະນຸດບົນພື້ນໂລກນັ້ນ.

54. ດູກ່ອນຜູ້ຮັ່ງມີບົນພື້ນໂລກ:

ດິນຍາກຈົນໃນທ່າມກາງຂອງເຈົ້ານັ້ນ ເປັນດິນໃນ

ຄວາມດູແລຂອງເຮົາ ເຈົ້າຈົ່ງໄດ້ພິທັກເຂົາແລະຢ່າ ໄດ້ເອົາໃຈໃສ່ແຕ່ຄວາມສະບາຍຂອງເຈົ້າເອງ.

55. *ດູກ່ອນບຸດແຫ່ງຄວາມປາດຖະໜາ:*

ຈົ່ງໃຫ້ຕົວຂອງເຈົ້າ ສະອາດຈາກຄວາມຮັ່ງມີ ອັນສົກກະປົກ ແລະ ຈົ່ງເຂົ້າໄປສູ່ດິນແດນ ແຫ່ງ ຄວາມຍາກຈົນດ້ວຍຫົວໃຈອັນສະຫງົບເພື່ອວ່າຈາກລຳທານແຫ່ງຄວາມບໍ່ຍຶດຖືຂອງເຈົ້ານັ້ນ ເຈົ້າອາດຈະໄດ້ດື່ມສາຍນ້ຳ ແຫ່ງຊີວິດອັນບໍ່ຮູ້ຈັກຕາຍ.

56. *ດູກ່ອນບຸດຂອງເຮົາພຣະອົງ :*

ການສົ່ງມາກັບຄົນທີ່ບໍ່ດີນັ້ນ ຈະເພີ່ມຄວາມເສຍໃຈ ແຕ່ການສາມະຄົມກັບຜູ້ປະພຶດທຳ ຈະກຳຈັດຂີ້ໝ້ຽງອອກໄປຈາກຫົວໃຈ ຜູ້ໃດ ສະແຫວງຫາພຣະ ເປັນເຈົ້າຂໍໃຫ້ຜູ້ນັ້ນ ທຳຕົວເປັນເພື່ອນກັບຜູ້ທີ່ພຣະເປັນເຈົ້າຮັກ ແລະ ຜູ້ໃດທີ່ປະສົງຟັງຄຳຂໍ ໃຫ້ເຂົາສົນໃຈໃນຖ້ອຍຄຳ ຂອງຜູ້ທີ່ພຣະເປັນເຈົ້າ ໄດ້ເລືອກສອນແລ້ວ.

57. ດູກ່ອນບຸດແຫ່ງທຸລີ :

ຈົ່ງລະວັງໄວ້ ຢ່າໄດ້ເດີນໄປກັບຄົນຊົ່ວ ແລະ ຢ່າສາມະຄົມກັບເຂົາ ເພາະເຫດວ່າການສາມະຄົມເຊັ່ນນີ້ ຈະເຮັດໃຫ້ ຄວາມສະຫວ່າງໃນຫົວໃຈ ກາຍເປັນໄຟທີ່ເຜົາໃໝ້ຫົວໃຈຂອງທ່ານ.

58. ດູກ່ອນຜູ້ເປັນບຸດແຫ່ງນາງຮັບໃຊ້ຂອງເຮົາພຣະອົງ :

ຫາກເຈົ້າປະສົງ ຈະສະແຫວງຫາ ຄວາມກະລຸນາຈາກພຣະອົງ ຈົ່ງຄົບກັບຄົນ ປະພຶດທຳ ເພາະເຫດວ່າຜູ້ປະພຶດທຳນັ້ນ ດື່ມຖ້ວຍນ້ຳ ອັນເປັນຊີວິດແຫ່ງອະນັນຕະການ ຊຶ່ງພຣະ ສາລະດາ ຍື່ນໃຫ້ ແລະ ຖ້ວຍນ້ຳນັ້ນປຽບສະເໝືອນ ຍາມເຊົ້າທີ່ທຳໃຫ້ ຜູ້ຫຼັບໄຫຼໄດ້ຕື່ນຂຶ້ນມາ.

59. ດູກ່ອນບັນດາຜູ້ທີ່ຫຼົງໄຫຼ :

ຢ່າໄດ້ຄິດວ່າ ຄວາມຫຼັບໃນຫົວໃຈນັ້ນ ຈະຊ່ວຍໃຫ້ມັນເປັນໄປບໍ່ໄດ້ ຈົ່ງຮູ້ໄວ້ເຖີດວ່າຄວາມຫຼັບເຊັ່ນວ່ານັ້ນໄດ້ຈາລຶກໄວ້ ເໝືອນຕົວອັກສອນ ຊັດເຈນ ແລະ ພຣະຜູ້ເປັນເຈົ້າຈະເຫັນຢູ່ສະເໝີ.

໖໐. ດູກ່ອນເພື່ອນທັງຫຼາຍ :

ເຮົາຂໍບອກເຈົ້າວ່າ ສິ່ງໃດກໍ່ຕາມ ທີ່ເຈົ້າ ໄດ້ເຊື່ອງໄວ້ພາຍໃນຫົວໃຈນັ້ນ ຈະເປີດເຜີຍ ແລະ ສະຫວ່າງສຳລັບເຮົາ ເໝືອນກາງວັນ ແຕ່ວ່າສິ່ງທີ່ໄດ້ເຊື່ອງໄວ້ໃນນັ້ນ ບໍ່ແມ່ນເຈົ້າ ຈະທຳໄດ້ ດ້ວຍຕົວຂອງເຈົ້າເອງແຕ່ເປັນເພາະເຮົາພຣະອົງຍັງກະລຸນາຢູ່.

໖໑. ດູກ່ອນບຸດແຫ່ງມະນຸດ :

ຕໍ່ປວງຊົນຂອງພິພົບນີ້ ເຮົາພຣະອົງ ໄດ້ໃຫ້ຢາດນ້ຳແຫ່ງມະຫາສະມຸດ ອັນຍັ່ງບໍ່ໄດ້ ແຫ່ງຄວາມເມດຕາຂອງເຮົາພຣະອົງແຕ່ກໍ່ບໍ່ມີຜູ້ໃດປົນໜ້ານາທາ ເນື່ອງຈາກວ່າທຸກໆຄົນປ່ຽນໄປເສຍຈາກນ້ຳທິບທີ່ຫຼັ່ງຈາກສະຫວັນໄປຮັບຍອດນ້ຳ ອັນສົກກະປົກ ດ້ວຍມົນທິນ ແລະ ໄປພໍໃຈກັບຖ້ວຍນ້ຳ ແຫ່ງ ຄວາມຕາຍ ສ່ວນຖ້ວຍແຫ່ງ ຄວາມງາມອັນເປັນອຳມະຕະນັ້ນ ກັບຖືກສູນຫາຍໄປເສຍ ເຂົາກັບໄປພໍໃຈກັບສິ່ງຕ່ຳຊ້າ.

໖໒. ດູກ່ອນບຸດແຫ່ງທຸລີ :

ຈົ່ງຢ່າໄດ້ຫັນສາຍຕາຂອງເຈົ້າ ໄປເສຍຈາກທ່ານ້ຳ

ອັນບໍ່ສິ້ນສຸດຂອງພະອົງ ແລະ ຢ່າໄປເບິ່ງເສດນ້າໃນ ຖ້ວຍສົກກະປົກ ຈາກຜູ້ຖືຖ້ວຍ ອັນເປັນອົມທິດ ນັ້ນ ເຈົ້າຈິ່ງ ຮັບຊີວິດ ອັນບໍ່ຮູ້ຕາຍໄວ້ເຖີດ ເພື່ອວ່າ ຄວາມສະຫຼາດທັງປວງຈະເປັນຂອງເຈົ້າ ແລະເພື່ອ ວ່າ ເຈົ້າຈະໄດ້ຟັງນ້າສຽງ ອັນລຶກລັບຊຶ່ງຮຽກຮອງ ມາຈາກດິນແດນອັນບໍ່ອາດຈະເຫັນໄດ້ ດູກ່ອນເຈົ້າ ຜູ້ມີຄວາມມຸ້ງໝາຍອັນຕ່າ ເຫດໃດ ເຈົ້າຈິ່ງຫັນໄປ ເສີຍຈາກນ້າອົມທິດອັນບໍ່ຮູ້ຕາຍ ຂອງເຮົາ ພຣະອົງ ເພື່ອໄປຮັບເອົາສິ່ງທີ່ຈະປ່ຽນແປໄປ.

63. *ດູກ່ອນເຈົ້າທັງຫຼາຍຊຶ່ງເປັນປະຊາຂອງໂລກ :*

ຈົ່ງຮັບຮູ້ໄວ້ເຖີດວ່າ ຍຸກອັນເບິ່ງບໍ່ເຫັນນັ້ນ ກຳລັງ ຕິດຕາມເຈົ້າຢູ່ ແລະ ໂທດຖາວນະອັນໜັກ ກຳລັງລໍ ເຈົ້າຢູ່ ຈົ່ງຢ່າໄດ້ຄິດວ່າອາລົມທັງຫຼາຍທີ່ເຈົ້າໄດ້ທຳ ນັ້ນ ຈະເລື່ອນໄປຈາກສາຍຕາ ຂອງເຮົາ ພຣະອົງ ຄວາມງາມ ຂອງເຮົາພຣະອົງ ເປັນສັກຂີໄດ້ວ່າທຸກ ສິ່ງທີ່ເຈົ້າທຳໄປນັ້ນ ປາກກາ ຂອງເຮົາພຣະອົງ ໄດ້ ບັນທຶກໄວ້ ດ້ວຍຕົວອັກສອນ ອັນຊັດເຈນ ບົນແຜ່ນ ສີລາ.

64. ດູກ່ອນບັນດາຜູ້ສ້າງຄວາມເດືອດຮ້ອນບົນພື້ນໂລກ:
ຈົ່ງຢັ້ງມືຂອງເຈົ້າເສຍຈາກທາລຸນບາບກຳເພາະວ່າ
ເຮົາ ຈະບໍ່ໃຫ້ອະໄພແກ່ຜູ້ໃດ ທີ່ທຳຄວາມ ຍຸດຕິທຳ
ນີ້ເປັນຄຳໝັ້ນທີ່ເຮົາພຣະອົງ ກຳນົດໄວ້ຢ່າງທີ່ເຮົາ
ພຣະອົງຈະບໍ່ໃຫ້ປ່ຽນໄປ.

65. ດູກ່ອນພວກເຈົ້າທີ່ທ້າທາຍເຮົາພຣະອົງ:

ຄວາມອົດກັ້ນຂອງເຮົາພຣະອົງນັ້ນທຳໃຫ້ເຈົ້າໄດ້ໃຈ
ແລະການທົນຮັບຄວາມລຳບາກ ຂອງເຮົາພຣະອົງ
ນັ້ນ ທຳໃຫ້ເຈົ້າມີຄວາມປະໝາດຈົນເຈົ້າຕັ້ງໜ້າແຕ່
ຈະໄປສູ່ຄວາມຫຼົ້ມຈົມ ດ້ວຍຄວາມປາດຖະໜາຂອງ
ເຈົ້າ ເຈົ້າຄິດຫຼືວ່າເຮົາພຣະອົງບໍ່ຮູ້ ແລະ ເຮົາພຣະ
ອົງບໍ່ສົນໃຈ.

66. ດູກ່ອນເຈົ້າຜູ້ໄປຈາກກຸ່ມ:
ລົ້ນຊື່ງເຮົາພຣະອົງໄດ້ກຳນົດໄວ້ສຳລັບໃຫ້ກ່າວເຖິງ
ເຮົາພຣະອົງ ຢ່າໄດ້ທຳໃຫ້ເປິະເປື້ອນເພາະເຫດອື່ນ
ຫາກວ່າເຈົ້າບໍ່ອາດຈະຊະນະໄພຂອງອັດຕາໄດ້ກໍ່ໃຫ້
ນຶກເຖິງຄວາມຜິດຂອງເຈົ້າເອງແລະຢ່າໄດ້ນຶກເຖິງ

ຄວາມຜິດຂອງຄົນອື່ນໆ ເພາະເຫດວ່າພວກເຈົ້າ
ທຸກຄົນນັ້ນຮູ້ຈັກຕົວເອງດີກ່ວາຮູ້ຈັກຜູ້ອື່ນ.

67. *ດູກ່ອນທາຣິກຜູ້ເພີ້ຝັນ:*

ຈົ່ງຮູ້ໄວ້ເຖີດວ່າຂະນະທີ່ລັງສີ ແຫ່ງຮຸ່ງອາລຸນໄດ້ໃຕ່ຂຶ້ນມາບະຂອບຟ້າ ແຫ່ງ ແດນອັນບໍ່ຮູ້ສິ້ນສຸດ ນັ້ນ ຄວາມລັບໃນຄວາມຊົ່ວ ແລະ ການກະທຳທີ່ລີ້ຊ້ອນໄວ້ໃນຄວາມມືດນັ້ນ ຈະປະກົດເບື້ອງໜ້າປະຊາກອນຂອງໂລກ.

68. *ດູກ່ອນທົ່ງຫຍ້າທີ່ງອກງາມຂຶ້ນຈາກຫຸລື:*

ເຫດໃດລະມືອັນເປື້ອນເປິະຂອງເຈົ້ານັ້ນບໍ່ສຳພັດອາພອນຂອງເຈົ້າກ່ອນແລະ ເຫດໃດບໍ່ຈະມາໃກ້ຊິດກັບເຮົາ ດ້ວຍຫົວໃຈ ເປິະເປື້ອນດ້ວຍຄວາມປາດຖະໜາແລະຄວາມມົວເມົາແລ້ວ ກໍ່ຈະເຂົ້າມາກັບເຮົາພຣະອົງສິ່ງທີ່ເຈົ້າປາດຖະໜາ ນັ້ນ ຍັງໄກໄປຈາກເຈົ້າຫຼາຍ.

69. *ດູກ່ອນທາຣິກ:*

ຖ້ອຍຄຳອັນເປັນກຸສົນແລະການກະທຳທີ່ເປັນບຸນະນັ້ນຈະຂຶ້ນໄປເຖິງສະຫວັນເບື້ອງບົນຈົ່ງພະຍາຍາມເຖີດ

ເພື່ອກຳຂອງເຈົ້າຈະມີຄວາມສະອາດ ປາສະຈາກທຸ ລິແຫ່ງໂມຫະ ແລະມາຍາ ແລ້ວກຳນັ້ນຈະເປັນທີ່ຮັກ ນະວິນານເບື້ອງບົນ ເພາະວ່າ ໃນບໍ່ຊ້າ ຜູ້ທີ່ຈະເປັນ ຜູ້ພິເຄາະສັດໂລກເບື້ອງໜ້າພະພັກຂອງພຣະອົງນັ້ນ ຈະບໍ່ຍອມຮັບສິ່ງໃດ ນອກຈາກ ຄຸນທຳອັນສູງສົ່ງ ແລະ ອັນບໍ່ລິສຸດປາສະຈາກມົນທິນ ນີ້ເປັນສຸລິຍະ ແຫ່ງຄວາມສະຫຼາດ ແລະ ຄວາມລີ້ລັບອັນເປັນທິບ ຊຶ່ງສາດແສງຢູ່ເໜືອປະລິມົນທິບຂອງພະຜູ້ເປັນເຈົ້າ ຜູ້ໃດທີ່ຫັນໄປທາງສຸລິຍະນີ້ ຈະມີຄວາມສຸກໂດຍແທ້.

70. ດູກ່ອນບຸດແຫ່ງໂລກ:

ໃນພູມີແຫ່ງພາວະນັ້ນ ມີຄວາມອະພິລົມ ສ່ວນອານາຈັກທີ່ເປັນອານັນຕະການນັ້ນ ຄວາມຮຸ່ງເຮືອງມີສູງກວ່າຫຼາຍ ຫາກເຈົ້າຈະຜ່ານພົບແຫ່ງຄວາມຕາຍນີ້ ໄປຈາກມື ຂອງຜູ້ທີ່ຖືສານ ຈາກພຣະເປັນເຈົ້າ ມີດ້ວຍນ້ຳອັນລີ້ລັບທີ່ຈະໃຫ້ເຈົ້າໄດ້ດື່ມເພື່ອພົບຄວາມປິຕິອັນວິສຸດທີ ຫາກວ່າເຈົ້າບັນລຸ ເຖິງສະພາວະນີ້ ແລ້ວ ເຈົ້າຈະໄປພົ້ນຈາກຄວາມເສື່ອມສູນແລະຈາກ

ຄວາມຕາຍຈາກຄວາມເໜື່ອຍຍາກ ແລະ ຄວາມ
ບາບ.

71. ດູກ່ອນສະຫາຍຂອງເຮົາພຣະອົງ:

ເຈົ້າຈົ່ງລະນຶກເຖິງ ບ້າຕິກສິ່ງເຈົ້າໄດ້ກະທຳໄວ້ກັບເຮົາພຣະອົງ ແຕ່ວ່າບັດນີ້ເຮົາພຣະອົງ ບໍ່ພົບວ່າຕູ້ໃດຍັງສັດຊື່ຕໍ່ຂໍ້ຕົກລົງນັ້ນ ແນ່ນອນເຫຼືອເກີນໃຈອັນກະດ້າງໄດ້ທຳໃຫ້ເຈົ້າລືມຂໍ້ຕົກລົງນັ້ນໄປເສຍ ເຖິງແມ່ນວ່າເຮົາພຣະອົງຈະຮູ້ເຊັ່ນນີ້ ເຮົາພຣະອົງກໍຍັງຄອຍ ແລະ ຍັງບໍ່ຖືເອົາເປັນໂທດກັບເຈົ້າ.

72. ດູກ່ອນຜູ້ຮັບໃຊ້ຂອງເຮົາພຣະອົງ:

ເຈົ້ານັ້ນເປັນສະເໝືອນກັບດາບທີ່ທຳໄວ້ຢ່າງດີແລ້ວ ແຕ່ລີ້ຢູ່ໃນຄວາມມືດຂອງຝັກ ຈຶ່ງບໍ່ມີຜູ້ໃດຮູ້ຄຸນຄ່າ ເພາະສະນັ້ນ ຈົ່ງອອກມາຈາກຝັກ ແຫ່ງຄວາມປາດຖະໜາ ແລະ ຈາກຕົວຂອງເຈົ້າເອງນັ້ນເຖີດເພື່ອວ່າຄຸນຄ່າອັນແທ້ຈິງເຈົ້ານັ້ນ ຈະໄດ້ປະກົດໃນໂລກທັງປວງ.

73. ດູກ່ອນສະຫາຍຂອງເຮົາພຣະອົງ:

ເຈົ້າເປັນປວງສຸລິຍະຢູ່ເທິງທ້ອງຟ້າແຫ່ງ ອະນຸພາບຂອງເຮົາພຣະອົງ ຈົ່ງຢ່າໃຫ້ຄວາມເປິະເປື້ອນຂອງໂລກນີ້ ປິດບັງປະກາຍແສງຂອງເຈົ້າເລຍ ຈົ່ງທຳລາຍມ່ານແຫ່ງຄວາມເສີຍເມີຍໃຫ້ຂາດໄປ ເພື່ອວ່າຈາກເບື້ອງຫຼັງຂອງ ອັນປິດບັງຢູ່ນັ້ນເຈົ້າຈະໄດ້ສ່ອງແສງປະກາຍ ແລະ ຈັດໃຫ້ສິ່ງທັງປວງໄດ້ມີຊີວິດເປັນອາກອນ.

74. ດູກ່ອນທາຣິກແຫ່ງຄວາມເພີ້ຝັນ:

ເຈົ້າລະຖິ້ມອານາຈັກ ອັນເປັນອຳນະຕະຂອງເຮົາພຣະອົງ ເພື່ອສະແຫວງອານຸພາບທີ່ບໍ່ຍັ້ງຍືນ ແລະເຈົ້າປະດັບຕົວຂອງເຈົ້າເອງ ດ້ວຍອາພອນອັນງາມຂອງໂລກ ແລະ ເຫັນວ່ານັ້ນດີສຳຫຼັບເຈົ້າ ຄວາມງາມຂອງເຮົາພຣະອົງເປັນພະຍານເຖີດ ເຮົາພຣະອົງຈະທຳທຸກສິ່ງທຸກຢ່າງໃຫ້ເປັນທຸລີ ແລະ ສີສົດອັນໂອ້ອ່າທັງປວງນັ້ນກໍ່ຈະສຸດສິ້ນໄປ ເວັ້ນແຕ່ຜູ້ທີ່ເລືອກສີຕາມຄວາມປະສົງຂອງເຮົາພຣະອົງເທົ່ານັ້ນ ເຮົາ

ພຣະອົງຈະຮັກສາໄວ້.

75. ດູກ່ອນທາຣົກຜູ້ລະເລີຍ:

ຈົ່ງຢ່າໄດ້ຝາກຫົວໃຈຂອງເຈົ້າໄວ້ກັບອະນຸພາບທີ່ຈະສູດສິ້ນໄປ ແລະ ຈົ່ງຢ່າໄດ້ມີຄວາມປີຕິກັບສິ່ງເຫຼົ່ານີ້ ເຈົ້ານັ້ນປຽບເໝືອນນົກທີ່ລອຍບິນໄປ ຕາມກິ່ງໄມ້ໂດຍບໍ່ໄດ້ລະວັງຕົວເມື່ອຄວາມຕາຍປຽບເໝືອນພານລ່າດ້ວຍເຫຍື່ອ ເຈົ້າລົງກັບທຸລີ ແລະ ເມື່ອນັ້ນສຽງຂັບປະສານຂອງເຈົ້າຮູບຂອງເຈົ້າ ແລະ ສີສັນຂອງເຈົ້າ ກໍໝົດສິ້ນໄປ ບໍ່ເຫຼືອສິ່ງໃດໄວ້ ດັ່ງນັ້ນ ຈົ່ງຕຶກຕອງເຖິດ ເຈົ້າຜູ້ເປັນທາດແຫ່ງຄວາມປາດຖະໜາ.

76. ດູກ່ອນບຸດແຫ່ງຍິ່ງຮັບໃຊ້ຂອງເຮົາພຣະອົງ

ແຕ່ກ່ອນນັ້ນຄໍາແນະນໍາຈະໃຫ້ດ້ວຍຄໍາເວົ້າແຕ່ເຖິງເວລາແລ້ວທີ່ຈະໃຫ້ດ້ວຍການກະທໍາ ທຸກຄົນຕ້ອງສະແດງອອກມາດ້ວຍການກະທໍາອັນບໍລິສຸດ ແລະນິທໍານະ ຄໍາເວົ້ານັ້ນ ທຸກຄົນບໍ່ໄດ້ເໝືອນກັນໝົດສ່ວນການກະທໍານັ້ນ ເປັນຂອງຜູ້ທີ່ຮັກເຮົາພຣະອົງ ຂໍໃຫ້

ເຈົ້າພະຍາຍາມເຖິດ ດ້ວຍຫົວໃຈ ແລະວິນຍານທີ່ສະແດງຕົວເຈົ້າດ້ວຍການກະທຳ ນີ້ເປັນຂອງເຮົາພຣະອົງທີ່ໃຫ້ແກ່ເຈົ້າໄວ້.

77. *ດູກ່ອນບຸດແຫ່ງຄວາມຍຸຕິທຳ:*

ທູດຂອງພຣະອົງໃນຍາມກາງຄືນໄດ້ລົງໄປຍັງເບື້ອງລ່າງ ແລະໄດ້ກັບມາພ້ອມກັບ ການຮ້ອງໃຫ້ຈິ່ນເຮັດໃຫ້ຜູ້ຊຸມນຸມຢູ່ນະພິມານນັ້ນຕ້ອງ ພາກັນຮ້ອງໃຫ້ໄປກັບເຂົາດ້ວຍ ເມື່ອຖືກຖາມວ່າເປັນຫຍັງຈິ່ງຮ້ອງໃຫ້ເຂົາກໍ່ຕອບວ່າ ທີ່ຂ້າພະເຈົ້າໄດ້ຖືກກຳນົດໃຫ້ລົງໄປເພື່ອທີ່ເຂົາເຫຼົ່ານັ້ນບົນພື້ນໂລກ ຈະຫັນກັບມາດ້ວຍໃຈອັນຈິງພັກດີນັ້ນ ອະນິຈາຂ້າພະເຈົ້າກັບໄດ້ເຫັນເລັບຕີນຂອງໝາ. ບົນພື້ນໂລກຍຽບຍ່ຳ ຜູ້ເປັນປະໜຶ່ງນົກພິລາບແຫ່ງຄວາມນິສັດຈະ ເມື່ອໄດ້ຟັ່ງເຊັ່ນນີ້ບັນດານາງ ແຫ່ງ ພິມານກໍ່ອອກມາຈາກ ເຮືອນທຳ ແລະ ຖາມເຖິງ ຊື່ຂອງເຂົາເຫຼົ່ານັ້ນທຸກໆ ຊື່ໄດ້ຖືກເອີ້ຍເວັ້ນແຕ່ນຶ່ງຊື່ ຄົນເມື່ອເລັ່ງໃສ່ບອກຕົວອັກສອນທາອິດຂອງຊື່ນັ້ນ ກໍ່ໄດ້ຖືກເອີ້ຍຂື້ນ ອັນທຳໃຫ້ຜູ້ທີ່ຍັງຄົງຢູ່ໃນ ແຫ່ງຫ້ອງພິມານນັ້ນ ຕ້ອງອອກມາ

ແລະ ເມື່ອອັກສອນຕົວທີ່ສອງໄດ້ຖືກເອີ່ຍຂຶ້ນເຂົາ
ເຫຼົ່ານັ້ນທັງໝົດ ກໍ່ລົ້ມຕົວລົງກັບພື້ນທຸລີ ແລະໃນທັນ
ໃດນັ້ນສຽງໜຶ່ງກໍ່ໄດ້ຍິນມາຈາກພາຍໃນວ່າ: ພໍເຖີດ
ເທົ່ານັ້ນພຽງພໍແລ້ວເຮົາພຣະອົງເອງ ເປັນພະຍານ
ໄດ້ວ່າ ເຂົາໄດ້ທໍາຫຍັງໄວ້ ແລະ ເວລານີ້ເຂົາທໍາ
ຫຍັງຢູ່.

78. *ດູກ່ອນບຸດແຫ່ງນາງຮັບໃຊ້ຂອງເຮົາພຣະອົງ:*

ຈົ່ງດື່ມສາຍທານແຫ່ງຄວາມລີ້ລັບ ອັນເປັນທິບຈາກ
ຈາກຄໍາຂອງຜູ້ປຽບດ້ວຍຄວາມກະລຸນາ ແລະ ຈົ່ງ
ຫາຄວາມສະຫຼາດຈາກຄໍາທີ່ສາສະດາໄດ້ເອີ່ຍໄວ້ຈົ່ງ
ເພາະພືດແຫ່ງປັນຍາ ທີ່ໄປຈາກເຮົາພຣະອົງບົນພື້ນ
ແຫ່ງດວງໃຈອັນບໍລິສຸດຂອງເຈົ້າ ແລະ ຈົ່ງບໍາລຸງຮັກ
ສາພືດນັ້ນ ຄວາມຕັ້ງໃຈ ເພື່ອວ່າກຸຫຼາບງາມ ແຫ່ງ
ຄວາມຮູ້ ແລະ ປັນຍາຈະໄດ້ງອກງາມສົດຊື່ນ ໃນນະ
ຄອນແຫ່ງຫົວໃຈຂອງເຈົ້າ.

79. *ດູກ່ອນບຸດແຫ່ງຄວາມປາດຖະໜາ*

ຈະອີກນານເທົ່າໃດ ທີ່ເຈົ້າຈະໂບກໂບຍໄປ ໃນດິນ

ແດນແຫ່ງຄວາມປາດຖະໜາເຮົາພຣະອົງ ໄດ້ມອບປີກໃຫ້ເຈົ້າ ເພື່ອທີ່ເຈົ້າຈະບິນໄປສູ່ອານາຈັກແຫ່ງຄວາມວິສຸດທີ່ອັນລຶກລັບ ບໍ່ແມ່ນວ່າໃຫ້ນຳເຈົ້າໄປສູ່ດິນແດນທີ່ຕ່ຳຊ້າ ແລະ ເຮົາພຣະອົງໄດ້ມອບຫວີໃຫ້ເຈົ້າ ເພື່ອທີ່ເຈົ້າຈະໄດ້ຕົບແຕ່ງ ເສັ້ນຜົມ ແຫ່ງທຳມະຂອງພຣະອົງ ບໍ່ແມ່ນວ່າເພື່ອຈະໃຊ້ກົດລ່າຄໍຂອງເຮົາພຣະອົງ.

80. ດູກ່ອນຄົນໃຊ້ຂອງເຮົາພຣະອົງ:

ເຈົ້າທັງຫຼາຍເປັນຕົ້ນໄມ້ ໃນສວນຂອງເຮົາພຣະອົງ ເຈົ້າຈະຕ້ອງໃຫ້ຜົນທີ່ດີ ແລະ ທີ່ງາມ ເພື່ອວ່າຕົວເຈົ້າເອງ ແລະ ຜູ້ອື່ນຈະໄດ້ປະໂຫຍດ ຈາກນັ້ນທຸກຄົນ ຈຶ່ງມີໜ້າທີ່ຈະຕ້ອງປະກອບອາຊີບ ແລະ ທຳການງານ ເພາະວ່ານີ້ຄື ແຫ່ງຄວາມມັ່ງມີ ດູກ່ອນເຈົ້າທັງຫຼາຍຜູ້ມີຄວາມເຂົ້າໃຈຜົນໄດ້ຮັບຍ່ອມເກີດມາຈາກການມີຫົນທາງ ແລະ ຄວາມກະລຸນາ ຂອງພຣະເຈົ້ານັ້ນ ເປັນສິ່ງທີ່ພໍສຳຫຼັບເຈົ້າ ຕົ້ນໄມ້ໃດທີ່ບໍ່ກາງເບີດຜົນຈະຕ້ອງນຳໄປໃຊ້ເປັນເຊື້ອໄຟ.

81. ດູກ່ອນຄົນໃຊ້ຂອງເຮົາພຣະອົງ:

ຄົນໃນລຳດັບຕ່ຳທີ່ສຸດນັ້ນ ໄດ້ແກ່ຜູ້ທີ່ບໍ່ໃຫ້ຜົນອັນໃດບົນພື້ນໂລກ ຄົນເຊັ່ນນັ້ນຖືວ່າເປັນຜູ້ທີ່ຕາຍແລ້ວເປັນຄົນທີ່ຕາຍແລ້ວໃນສາຍຕາຂອງພຣະເປັນເຈົ້າຍັງດີກວ່າວິນຍານທີ່ກຽດຄ້ານບໍ່ມີຄ່າ.

82. ດູກ່ອນຄົນໃຊ້ຂອງເຮົາພຣະອົງ:

ຜູ້ທີ່ດີທີ່ສຸດໃນບັນດາຄົນນັ້ນໄດ້ແກ່ຜູ້ທີ່ລ້ຽງຕົວດ້ວຍອາຊີບຂອງຕົນແລະນຳສິ່ງທີ່ຫາໄດ້ມາໃຊ້ສຳລັບຕົນເອງ ແລະ ສຳລັບຜູ້ອື່ນ ດ້ວຍຄວາມຮັກໃນພຣະຜູ້ເປັນເຈົ້າ ຊຶ່ງເປັນພຣະເປັນເຈົ້າແຫ່ງໂລກທັງປວງບັດນີ້ດ້ວຍຄວາມອາລີຂອງພຣະເປັນເຈົ້າແລະຄວາມເມດຕາຂອງພຣະອົງເຮົາພຣະອົງໄດ້ເປີດເຜີຍແສງແຫ່ງທຳມະອັນລຶກລັບ ແລະ ນະທັດສະຈັນຊຶ່ງແຕ່ກ່ອນຄອບຄຸມຢູ່ປຽບເໝືອນ ເຈົ້າສາວຖືກປິດບັງດ້ວຍຜ້າຄຸມສະບນ ຄວາມງາມແຫ່ງທຳມະໄດ້ສາຍແສງມາຈາກພຣະຜູ້ເປັນທີ່ຮັກແລ້ວສະຫາຍທັງຫຼາຍຂອງເຮົາພຣະອົງ ເຮົາຂໍອ້າງ ເປັນຫຼັກຖານວ່າ

ຄວາມເມດຕາຈາກພຣະເປັນເຈົ້ານັ້ນ ສົມບູນແລ້ວ
ຖ້ອຍຄຳ ທີ່ເຮົາພຣະອົງກ່າວ ເປັນອັນສຸດສິ້ນ ແລ້ວ
ບັດນີ້ຈະເຫຼືອຢູ່ວ່າຄວາມພະຍາຍາມຂອງເຈົ້າແຫ່ງ
ຄວາມບ່ຖຸກຕິດນັ້ນ ຈະປາກົດໄດ້ພຽງໃດ ໃນເມື່ອ
ຄວາມເມດຕາຈາກພຣະຜູ້ເປັນເຈົ້າ ໄດ້ສະແດງຕ່
ເຈົ້າ ແລະ ຕ່ສາສະນິກະຊົນທັງປວງທັງໃນສະຫວັນ
ແລະບົນພື້ນໂລກ ໂດຍພ້ອມມູນແລ້ວຂໍພຣະຜູ້ເປັນ
ເຈົ້າຜູ້ເປັນເຈົ້າແຫ່ງໂລກທັງປວງ ຈົ່ງໄດ້ຮັບສະດຸດີ
ຈາກຄົນທົ່ວໄປເຖີດ.



ພິມທີ່ ໂຮງພິມແຫ່ງລັດ